1. ແມ່ຍິງທີ່ເປັນຜູ້ນຳສາມາດເຮັດຫຍັງໄດ້ແດ່ເພື່ອໃຫ້ມີການປ່ຽນແປງຈຳນວນໜຶ່ງກ່ຽວກັບຄວາມເຂົ້າໃຈ ແລະ ວິທີປະຕິບັດຂອງຊຸມຊົນທີ່ພົວພັນເຖິງແມ່ຍິງ ແລະ ການສືບມູນມໍລະດົກ? ທາງເລືອກທີ່ເປັນໄປໄດ້ທີ່ຕ້ອງໄດ້ພິຈາລະນາມີຄືດັ່ງຕໍ່ໄປນີ້:
    - ເວົ້າເຖິງຄວາມຜິດພາດທີ່ຜ່ານມາ, ຕົວຢ່າງເຊັ່ນ: ຖ້າຫາກວ່າແມ່ຍິງບໍ່ມີສິດໄດ້ສືບມູນມໍລະດົກ, ຈະສາມາດເຮັດຫຍັງໄດ້ແດ່ໃນສະພາບປັດຈຸບັນນີ້ສຳລັບແມ່ຍິງທີ່ບໍ່ມີທີ່ດິນ?
    - ຈັດໃຫ້ມີ ການປ່ຽນແປງ ໃນກົດໝາຍຕາມປະເພນີ?
    - ຈັດໃຫ້ມີ ການປ່ຽນແປງ ພາຍໃນຄອບຄົວ?

2. ຜູ້ນຳ/ຜູ້ອາວຸດໂສຂອງຊຸມຊົນຈະສາມາດໄດ້ຮັບການສະໜັບສະໜູນແນວໃດເພື່ອເຮັດໃຫ້ການຕັດສິນບັນຫາກ່ຽວກັບການເຂົ້າເຖິງການສືບມູນມໍລະດົກຂອງແມ່ຍິງມີຄວາມເປັນທຳ?

ບາງຊຸມຊົນ ກໍໄດ້ພະເຊີນໜ້າກັບບັນຫາການແຕ່ງຕັ້ງຜູ້ນຳຊຸມຊົນ ແລະ ການປ່ຽນແທນສະພາທີ່ປຶກສາຕາມປະເພນີ ຫຼື ສະຖາບັນໂດຍລັດຖະບານ. ໃນສະພາບຄືແນວນີ້, ສິ່ງເຫຼົ່ານີ້ສາມາດເປັນສິ່ງກີດກັ້ນຕໍ່ການຊຸກຍູ້ຜູ້ນຳຊຸມຊົນຄົນໃໝ່ໃຫ້ເຂົ້າໃຈບັນຫາໃດໜຶ່ງ. ນອກຈາກນີ້ ຜູ້ນຳຊຸມຊົນບາງຄົນອາດຈະເປີດໂອກາດໃຫ້ຄຳແນະນຳກ່ຽວກັບການປ່ຽນແປງກົດໝາຍຕາມປະເພນີ, ໂດຍໃຫ້ຄຳເຫັນວ່າກົດໝາຍຕາມປະເພນີມີການເຄື່ອນທີ່ ແລະ ປ່ຽນແປງໄປກັບເວລາ, ໃນຂະນະທີ່ຜູ້ອື່ນອາດຈະຢືນຢັນວ່າມັນຄົງທີ່ ແລະ ຄັດຄ້ານການປ່ຽນແປງທຸກໆປະເພດ. ຄວາມເປັນໄປໄດ້ຈຳນວນໜຶ່ງເພື່ອຊຸກຍູ້ໃຫ້ຜູ້ນຳເຂົ້າໃຈອາດຈະແມ່ນດ້ວຍການລວບລວມກໍລະນີ ຫຼື ການດຳເນີນການສຶກສາກ່ຽວກັບແມ່ຍິງທີ່ເປັນເຈົ້າຂອງທີ່ດິນ ແລະ ເພື່ອສະແດງໃຫ້ເຫັນຄວາມຮັບຜິດຊອບທີ່ພວກເພິ່ນມີ ແລະ ໄດ້ພັດທະນາທີ່ດິນ.

**3. ວິຖີທາງໃໝ່ເພື່ອກ້າວໄປຂ້າງໜ້າ**

ມາວຣິສ ຫຼາຍຄົນ ຢູ່ນິວຊີແລນ ໄດ້ສ້າງຕັ້ງກອງທຶນທີ່ດິນຄອບຄົວ. ທີ່ດິນທີ່ເຄີຍໄດ້ຖ່າຍທອດໃຫ້ບຸກຄົນໜຶ່ງດຽວນີ້ແມ່ນເອົາປະໄວ້ໃນກອງທຶນ ເພື່ອໃຫ້ໝົດຄອບຄົວມີສິດຕໍ່ທີ່ດິນ ແລະ ການຕັດສິນບັນຫາກ່ຽວກັບການນຳໃຊ້ ທີ່ດິນແມ່ນເຮັດແບບລວມໝູ່. ຫຼາຍໆຄອບຄົວຢູ່ບ່ອນອື່ນກໍໄດ້ເອົາໄປນຳໃຊ້ເຊັ່ນດຽວກັນການປະສົມແນວຄວາມຄິດແບບຊົນເຜົ່າຂອງການເປັນເຈົ້າກຳມະສິດລວມໝູ່ໂດຍນຳໃຊ້ແນວຄວາມຄິດສະໄໝໃໝ່ຂອງການເອົາມໍລະດົກເຂົ້າກອງທຶນ. ວິຖີທາງໃໝ່ເຫຼົ່ານີ້ມີຄວາມເປັນໄປໄດ້ຫຼາຍປານໃດໃນຊຸມຊົນຂອງທ່ານ?

# ບົດທີ6

## ຄວາມຮຸນແຮງ ຕໍ່ ແມ່ຍິງ

*ຈຸດປະສົງ:*

1. ເພື່ອໃຫ້ມີສະຖານທີ່ແກ່ແມ່ຍິງຊຶ່ງເຜົ່າໄດ້ປຶກສາຄົ້ນຄວ້າບັນຫາຄວາມຮຸນແຮງຕໍ່ແມ່ຍິງ, ໂດຍສະເພາະແມ່ນຄວາມຮຸນແຮງໃນຄົວເຮືອນ, ການລວນລາມທາງເພດ ແລະ ການນຳໃຊ້ອຳນາດທາງທະຫານ
2. ເພື່ອສະໜັບສະໜູນຕົ້ນປາຍສາຍເຫດຂອງຄວາມຮຸນແຮງຕໍ່ແມ່ຍິງ



# ຄວາມຮຸນແຮງຕໍ່ແມ່ຍິງ

*ຈຸດປະສົງ:*

3. ເພື່ອໃຫ້ມີສະຖານທີ່ແກ່ແມ່ຍິງຊົນເຜົ່າໄດ້ປຶກສາຄົ້ນຄວ້າບັນຫາຄວາມຮຸນແຮງຕໍ່ແມ່ຍິງ, ໂດຍສະເພາະແມ່ນຄວາມຮຸນແຮງໃນຄົວເຮືອນ, ການລວນລາມທາງເພດ ແລະ ການນຳໃຊ້ອຳນາດທາງທະຫານ
4. ເພື່ອສະໜັບສະໜູນຕົ້ນປາຍສາຍເຫດຂອງຄວາມຮຸນແຮງຕໍ່ແມ່ຍິງ

*ເວລາ:* 1 ຊົ່ວໂມງ 30 ນາທີ

**ບົດຝຶກຫັດ I– ວາລະແບ່ງປັນ (1 ຊົ່ວໂມງ 10 ນາທີ)**

1. ຂໍຮ້ອງຜູ້ເຂົ້າຮ່ວມ 2 ຫຼື 3 ຄົນ ໃຫ້ແບ່ງປັນປະສົບການ ແລະ ຄວາມຮູ້ຂອງພວກເພິ່ນໃຫ້ແກ່ກັນກ່ຽວກັບເລື່ອງຕໍ່ໄປນີ້:
   a) ຄວາມຮຸນແຮງໃນຄົວເຮືອນ
   b) ການລວນລາມທາງເພດ
   c) ອື່ນໆ ທີ່ເຫັນວ່າເປັນບັນຫາສຳຄັນ
2. ແຕ່ລະຄົນແບ່ງປັນບັນຫາທີ່ພົວພັນເຖິງເລື່ອງຂອງຕົນ, ປະສົບການຕົວຈິງ, ການປະຕິບັດການໂດຍແມ່ຍິງ ແລະ ເປັນຫຍັງຈຶ່ງບໍ່ໄດ້ປະຕິບັດການ. ແຕ່ລະຄົນມີເວລາ 20 ນາທີ ເພື່ອແບ່ງປັນ.
3. ພາຍຫຼັງວາລະແບ່ງປັນ ແມ່ນການປຶກສາຄົ້ນຄວ້າ. ຜູ້ອຳນວຍຄວາມສະດວກສະຫຼຸບສັງລວມຈຸດໃຫຍ່ໆຂອງການປຶກສາຄົ້ນຄວ້າ/ການແບ່ງປັນດ້ວຍການຈັດກຸ່ມຄວາມຄິດເປັນບັນຫາ ການປະຕິບັດການທີ່ໄດ້ດຳເນີນແລະເປັນຫຍັງຈຶ່ງບໍ່ໄດ້ມີການດຳເນີນການປະຕິບັດການ. (10 ນາທີ)

**ການນຳສະເໜີ, ການປຶກສາຄົ້ນຄວ້າ ແລະ ການສັງເຄາະ: (20 ນາທີ)**

ຮູບແບບຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ

ແມ່ຍິງ ແລະ ເດັກນ້ອຍທົນຮັບຄວາມຮຸນແຮງໃນ 3 ຮູບແບບໃຫຍ່: ຄວາມຮຸນແຮງຕໍ່ຮ່າງກາຍ (ການນຳໃຊ້ກຳລັງຕໍ່ຮ່າງກາຍ ຫຼື ອາວຸດ), ຄວາມຮຸນແຮງຕໍ່ຈິດໃຈ (ການປະຕິບັດການ ຫຼື ການເມີນເສີຍທີ່ພາໃຫ້ມີການທໍລະມານທາງຈິດໃຈ, ການທາລຸນ ຫຼື ການຈຳກັດອິດສະລະພາບຂອງ

ແມ່ຍິງ ແລະ ເດັ□ນ້ອຍ) ແລະ ຄວາມຮູນແຮງທາງເພດ (□ານປະຕິບັດ□ານທີ່ເອົາເສລີພາບ ຫຼື ລະເມີດສິດທິທາງເພດຂອງແມ່ຍິງ).

ເປັນທີ່ຈະແຈ້ງແລ້ວວ່າແມ່ຍິງ ແລະ ເດັ□ນ້ອຍເຄີຍພົບໝົດທັງ 3 ຮູບແບບຂອງຄວາມຮຸນແຮງໃນຫຼາຍສະຖານທີ່ ທີ່ແຕ□ຕ່າງ□ັນ. ຢູ່ໃນເຮືອນ, ແມ່ຍິງ ແລະ ເດັ□ນ້ອຍຫຼາຍຄົນເປັນຜູ້ເຄາະຮ້າຍຂອງຂົ່ມເຫງຈາ□ສະມາຊິ□ຄອບຄົວຂອງເຂົາເຈົ້າ. ຕາມປົ□□ະຕິແລ້ວຄອບຄົວແມ່ນຖື□ຖືວ່າເປັນສະຖານທີ່ແຫ່ງຄວາມຮັກ, ຄວາມອົບອຸ່ນ, ຄວາມປອດໄພ,  ສະໜັບສະໜູນ ແລະ ຄວາມເຂົ້າໃຈຊຶ່ງ□ັນແລະ□ັນສຳລັບແມ່ຍິງ ແລະ ເດັ□ນ້ອຍ.  ເຖິງຢ່າງໃດ□ໍ່, ຄວາມເປັນຈິງແມ່ນວ່າແມ່ຍິງ ແລະ ເດັ□ນ້ອຍຫຼາຍຄົນເປັນຜູ້ເຄາະຮ້າຍຂອງຄວາມຮຸນແຮງໃນຄົວເຮືອນ ຫຼືພາຍໃນເຮືອນຂອງຄອບຄົວ.

ຄວາມຮຸນແຮງທີ່ເ□ີດຂຶ້ນຢູ່ໃນຊຸມຊົນລວມເຖິງ□ານຂົ່ມຂືນ□ະທຳຊຳເລົາ, ການທຳຮ້າຍທາງເພດ □ານລວນລາມທາງເພດ, □ານນາບຂູ່ຢູ່ບ່ອນເຮັດວຽ□, ໂຮງຮຽນ ຫຼືສະຖານທີ່ສາທາລະນະອື່ນໆ. ມັນລວມເຖິງການສະແຫວງຫາຜົນປະໂຫຍດຈາ□□ານຂາຍບໍລິ□ານທາງເພດຂອງແມ່ຍິງ ແລະ ເດັ□ນ້ອຍ.

ຄວາມຮັບຜິດຊອບຂອງລັດຖະບານ□ຽວ□ັບຄວາມຮຸນແຮງຕໍ່ແມ່ຍິງແມ່ນເຫັນໄດ້ ໃນຄະດີຄວາມຮຸນແຮງຂອງລັດເປັນຕົ້ນ□ານຂົ່ມຂືນທຳຊຳເລົາ, ການຈັບກຸມ ແລະ ການລົບ□ວນແມ່ຍິງໂດຍທະຫານ. ສິ່ງນີ້ຍັງສາມາດເຫັນໄດ້ຢູ່ໃນນະໂຍບາຍ ແລະ ໂຄງການຂອງລັດຖະບານ, ຊຶ່ງ□ະທົບຢ່າງໜັກໜ່ວງຕໍ່ການດຳລົງຊີວິດຂອງພາ□ສ່ວນພື້ນຖານຂອງປະຊາຊົນ, ໂດຍສະເພາະແມ່ນ□ຽວ□ັບ□ານດຳລົງຊີວິດຂອງແມ່ຍິງເຊິ່ງຍັງເກີດຂຶ້ນຢູ່ໃນບາງປະເທດ.

ຜົນ□ະທົບຂອງຄວາມຮຸນແຮງຕໍ່ແມ່ຍິງ

ຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັ□ນ້ອຍ, ບໍ່ວ່າຈະຢູ່ໃນເຮືອນຂອງພວ□ເພິ່ນ, ຢູ່ໃນຊຸມຊົນ ຫຼື ຈາກສະຖານທີ່ເຮັດວຽ□, ມັນຈະ□ະທົບໂດຍກົງຕໍ່ຜູ້ເຄາະຮ້າຍ, ຕໍ່ຮ່າງກາຍ, ທາງດ້ານຈິດໃຈ ແລະ ທາງເພດ. ມັນພາໃຫ້ມີຄວາມເສຍຫາ ແລະ ເຈັບປວດ, ຈາ□ຄວາມເສຍຫາຍເລັ□ໆນ້ອຍໆໄປເຖິງ□ານເຮັດໃຫ້ເປັນຄົນພິ□ານຖາວອນ ແລະ ຕາຍ. ຜົນຈາ□□ານຄົ້ນຄວ້າທາງ□ານແພດສະແດງໃຫ້ເຫັນວ່າ□ານລວນລາມທາງເພດ ແລະ ການຂົ່ມຂືນ□ະທຳຊຳເລົາ ໂດຍບຸ□ຄົນທີ່ເປັນທີ່ຮູ້ຈັ□ຕໍ່ຜູ້ເຄາະຮ້າຍ ແລະ ການເຮັດໃຫ້ມີຄວາມເສຍຫາຍຕໍ່ຮ່າງກາຍ ຫຼື ຈິດໃຈຈາ□ບຸ□ຄົນທີ່ຮູ້ຈັ□ຕໍ່ຜູ້ເຄາະຮ້າຍແມ່ນມີຫຼາຍ□ວ່າ□ານເຮັດໃຫ້ມີຄວາມເສຍຫາຍທີ່ໄດ້ຮັບຈາ□ຄົນແປ□ໜ້າ. ຜົນ□ະທົບຂອງຄວາມຮຸນແຮງແມ່ນໄລຍະຍາວ. ແມ່ຍິງ ແລະ ເດັ□ນ້ອຍ ທີ່ໄດ້ປະສົບຄວາມຮຸນແຮງດັ່ງ□່າວດ້ວຍຕົນເອງກໍແບ□ຫາບຄວາມຮູ້ສຶກ ແລະ ເກັບກົດ, ໂດຍສູນເສຍຄວາມເຊື່ອໝັ້ນ.

ໃນ□ລະນີມີ□ານລວນລາມທາງເພດຕໍ່ແມ່ຍິງ, ໄພຂົ່ມຂູ່ຈາ□ເຊື້ອໂຣ□ເອດ HIV/AIDS ແມ່ນ ຄວາມກັງວົນທີ່ສຳຄັນ. □ານແຜ່ຂອງເຊື້ອເອດ ເປັນ□ານພະເຊີນໜ້າທາງເພດແບບບັງຄັບພາໃຫ້ ແມ່ຍິງມີ□ານພະເຊີນໜ້າ□ັບເວລາຂອງ□ານດຳລົງຊີວິດທີ່ມີຄວາມຕ້ອງການເບິ່ງແຍງສຸຂະພາບ ຂອງຕົນເອງເພີ້ມຂື້ນ ແລະ ຕໍ່ມາ□ີເບິ່ງສຸຂະພາບຂອງລູ□ໆ ແລະ ສະມາຊິກຄອບຄົວ.

ນອ□ຈາ□ຜົນ□ະທົບໂດຍກົງຕໍ່ຜູ້ຖື□ເຄາະຮ້າຍ, ຄວາມຮຸນແຮງຍັງມີຜົນ□ະທົບຕໍ່ສັງຄົມນຳອີກ. ເດັ□ນ້ອຍທີ່ອາໄສຢູ່ໃນຄອບຄົວທີ່ມີຄວາມຮຸນແຮງໃນຄົວເຮືອນ, ຜູ້ທີ່ເຫັນຄວາມຮຸນແຮງລະ ຫວ່າງພໍ່ແມ່ຂອງຕົນ, ກໍຮຳຮຽນຈາ□ຕົວຢ່າງທີ່ໄດ້ເຫັນໃຫ້ແ□ຕົນ. ເມື່ອເວລາເປັນຜູ້ໃຫຍ່, ມັນ□ີມີ ຄວາມເປັນໄປໄດ້ຫຼາຍຂື້ນທີ່ເດັ□ນ້ອຍເຫຼົ່ານີ້ຈະນຳໃຊ້ຄວາມຮຸນແຮງຕໍ່ຄອບຄົວຂອງຕົນເອງ ຫຼື ຜູ້ ອື່ນໆອ້ອມຂ້າງຕົນ.

<u>ປັດໃຈທີ່ເປັນສາເຫດຂອງຄວາມຮຸນແຮງ</u>

ຮາ□ເຫງົ້າຂອງຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັ□ນ້ອຍ ສາມາດມາຈາ□ລະບົບສັງຄົມບູຮານ, ຊຶ່ງ ນອນຢູ່ທີ່ໝາ□ຫົວໃຈຂອງວັດທະນະທຳຂອງພວ□ເຮົາ ແລະ ຢູ່ພາຍໃຕ້ຄວາມຮູ້ສຶກຂອງແຕ່ລະ ບຸກຄົນ. ການປົກຄອງແບບພໍ່□ັບລູ□ພາໃຫ້ມີຄວາມປະພຶດທີ່ແຕ□ຕ່າງ□ັນລະຫວ່າງເພດຊາຍ-ຍິງ ໂດຍນຳໄປສູ່□ານຈຳແນ□ທາງເພດ. ແມ່ຍິງໄດ້ຖື□ມອງວ່າເປັນຜູ້ທີ່ຢູ່ຕ່ຳ□ວ່າ ຫຼື ຢູ່ໃຕ້ບັງຄັບບັນ ຊາຂອງຜູ້ຊາຍ, ດີແຕ່ພຽງສຳລັບເພດຫຼືສຳລັບເຮືອນມັນສາມາດແມ້□ະທັ້ງຈັດວາງ ແລະ ອ້າງເຫດ ຜົນສະໜັບສະໜູນສິດທິ ແລະ ອຳນາດຂອງຜູ້ຊາຍ ໃນ□ານນຳໃຊ້ຄວາມຮຸນແຮງຕໍ່ແມ່ຍິງແລະ ເດັ□ນ້ອຍ. ສະນັ້ນ ແມ່ຍິງຈຶ່ງມີແນວໂນ້ມທີ່ຈະເຫັນຄວາມຮຸນແຮງຕໍ່ຕົນເອງເປັນບາງສິ່ງບາງຢ່າງ ທີ່ພວ□ເພິ່ນຄວນມີຄວາມລະອາຍໃຈ ຫຼື ທີ່ວ່າມັນແມ່ນຄວາມຜິດຂອງຕົນດ້ວຍເຫດໃດໜຶ່ງບໍ່ຮູ້. ສະນັ້ນ ພວ□ເພິ່ນຈຶ່ງພະຍາຍາມທີ່ຈະປິດບັງຄວາມຮຸນແຮງ, ຍ້ອນມີຄວາມຢ້ານກົວວ່າຖ້າຫາກ ສາທາລະນະຊົນຮູ້ພວ□ເພິ່ນ□ີຈະຖື□ສັງຄົມວິຈານ. ມັນມີຄວາມຈຳເປັນສຳລັບແມ່ຍິງທີ່ຈະຕ້ອງ ໄດ້ຢຸດວັດທະນະທຳ□ານຫ້າມບໍ່ໃຫ້ເວົ້າຈາ, ລາຍງານ ແລະ ຕໍ່ສູ້ຄືນ ຕ້ານຄວາມຮຸນແຮງທຸ□ຮູບ ແບບທີ່ເຮັດໃຫ້ຕົນຕ້ອງໄດ້ຮັບຄວາມທໍລະມານ.

# ບົດທີ7

## ການແບ່ງວຽກໃນຄົວເຮືອນ

*ຈຸດປະສົງ:*

1. ເພື່ອໃຫ້ເຂົ້າໃຈສະພາບການແບ່ງວຽກໃນຄົວເຮືອນລະຫວ່າງຜູ້ຊາຍ ແລະ ແມ່ຍິງຢູ່ໃນຄົວເຮືອນ.
2. ເພື່ອປຶກສາຄົ້ນຄວ້າກ່ຽວກັບປະເພດການປັບປຸງແປງທີ່ມີຄວາມເປັນໄປໄດ້ ແລະ ສິ່ງທີ່ສາມາດເຮັດເພື່ອປັບປຸງແປງສະພາບ

ເວລາ: *1 ຊົ່ວໂມງ 30 ນາທີ*



# ການແບ່ງວຽກ ໃນຄົວເຮືອນ

*ຈຸດປະສົງ:*

3. ເພື່ອໃຫ້ເຂົ້າໃຈສະພາບການແບ່ງວຽກໃນຄົວເຮືອນລະຫວ່າງຜູ້ຊາຍ ແລະ ແມ່ຍິງຢູ່ໃນຄົວເຮືອນ.
4. ເພື່ອປຶກສາຄົ້ນຄວ້າກ່ຽວກັບປະເພດການປ່ຽນແປງທີ່ມີຄວາມເປັນໄປໄດ້ ແລະ ສິ່ງທີ່ສາມາດເຮັດເພື່ອປ່ຽນແປງສະພາບ

*ເວລາ:* 1 ຊົ່ວໂມງ 30 ນາທີ

**ບົດຝຶກຫັດ I-ການແບ່ງວຽກຢູ່ໃນຄອບຄົວຂອງພວກເຮົາ (20 ນາທີ)**

1. ແບ່ງຜູ້ເຂົ້າຮ່ວມອອກເປັນ 2 ກຸ່ມ.
2. ແຕ່ລະກຸ່ມເຮັດບັນຊີລາຍການວຽກທີ່ສ່ວນຫຼາຍຜູ້ຊາຍ, ຜູ້ຍິງເຮັດ ແລະ ຍິງ-ຊາຍເຮັດຮ່ວມກັນ. **(ນຳໃຊ້ຮູບພາບມືໃຜເຮັດວຽກ)**
3. ຈາກນັ້ນທັງ 2 ກຸ່ມ ສາມາດສົມທຽບບັນຊີລາຍການ ແລະ ປຶກສາຄົ້ນຄວ້າກ່ຽວກັບວິທີການແບ່ງປັນວຽກຄົວເຮືອນຢູ່ໃນຄອບຄົວ.
4. ຜູ້ອຳນວຍຄວາມສະດວກພາສະຫລຸບແລະໄຈ້ແຍກຮວ່ມກັນກ່ຽວກັບບັນຊີລາຍການວຽກເພື່ອໃຫ້ຜູ້ເຂົ້າຮວ່ມເຫັນໄດ້ສະພາບຄວາມສະເໜີພາບພາຍໃນຄົວເຮືອນ ແລະ ໃນສັງຄົມປະຈຸບັນ

**ການນຳສະເໜີ ແລະ ການປຶກສາຄົ້ນຄວ້າ: (10 ນາທີ)**

<u>ການແບ່ງວຽກໃນຄົວເຮືອນ</u>

ຢູ່ໃນສັງຄົມຊົນນະບົດແບບຊົນເຜົ່າ, ວຽກງານກະສິກຳແມ່ນອີງໃສ່ການແບ່ງແຮງງານລະຫວ່າງແມ່ຍິງ ແລະ ຜູ້ຊາຍ. ເຊັ່ນຕົວຢ່າງໃນການເຮັດນາ, ຜູ້ຊາຍຈະເຮັດວຽກໄຖນາ ແລະ ບຸກເບີກທີ່ດິນ, ຊຶ່ງຖືວ່າເປັນວຽກໜັກ. ແມ່ຍິງເຮັດວຽກເບົາ ຊຶ່ງຮຽກຮ້ອງຕ້ອງການຫຼາຍຊົ່ວໂມງ ແລະ ຫຼາຍວັນເປັນຕົ້ນການຫຼົກຫຍ້າ. ການເກັບກ່ຽວສ່ວນຫຼາຍແມ່ນຜູ້ຊາຍ ແລະ ແມ່ຍິງເຮັດຮ່ວມກັນ.

ເຖິງຢ່າງໃດກໍດີ, ວຽກຄົວເຮືອນ ຫຼື ວຽກເຮືອນການຊານ (ບໍ່ລວມ ຫຼື ລວມເຖິງການລ້ຽງລູກ) ສ່ວນໃຫຍ່ແມ່ນປະໃຫ້ແມ່ຍິງ. ສິ່ງນີ້ຖືກຕ້ອງແມ່ນໃນປັດຈຸບັນ, ແມ້ກະທັ້ງໃນບາງກໍລະນີບ່ອນທີ່ແມ່ຍິງອາດເປັນຜູ້ມີລາຍຮັບສ່ວນໃຫຍ່ຂອງຄອບຄົວ. ວຽກເຮືອນແມ່ນນັບຕັ້ງແຕ່ການແຕ່ງຢູ່ຄົວກິນ,ການອະນາໄມ, ການຊັກເຄື່ອງ, ການຮີດເຄື່ອງ (ໃນຍຸກທັນສະໄໝ), ຕັກນໍ້າ ແລະ ຫາຟືນ. ເຖິງແມ່ນວ່າເຄື່ອງໃຊ້ສະໄໝໃໝ່ເປັນຕົ້ນເຄື່ອງຄົວກິນທີ່ໃຊ້ກ໊າສ ແລະ ຈັກຊັກເຄື່ອງໄດ້ເຮັດໃຫ້ການແບກຫາບວຽກເຮືອນເບົາລົງ, ວຽກອື່ນ ແລະ ຄວາມຮັບຜິດຊອບໄດ້ຖືກເອົາເພີ້ມໃສ່ປະລິມານງານຂອງແມ່ຍິງເປັນຕົ້ນ ການຄຸ້ມຄອງລາຍຈ່າຍຂອງຄົວເຮືອນ, ການຊໍາລະໃບບິນ ແລະ ອື່ນໆ.

ຄືກັນກັບຫຼາຍໆບັນຫາກ່ຽວກັບບົດບາດຍິງ-ຊາຍອື່ນໆ, ມັນຈະມີຄວາມຫຍຸ້ງຍາກຫຼາຍເລື້ອຍໆໃນການປຶກສາຄົ້ນຄວ້າກ່ຽວກັບການແບ່ງວຽກຄົວເຮືອນກັບຜົວຂອງຕົນ, ອ້າຍນ້ອງ ແລະ ພໍ່ແມ່ຢູ່ໃນຄອບຄົວ. ທັງນີ້ແມ່ນຍ້ອນວ່າຄໍາເຫັນມີແນວໂນ້ມໄປຫາການເອົາເປັນການໃສ່ຄວາມກັນເພາະສະນັ້ນ, ການປຶກສາຄົ້ນຄວ້າຈຶ່ງສາມາດກາຍມາເປັນການເຮັດໃຫ້ກີດຂວາງແລະການເຮັດໃຫ້ເປັນສ່ວນຕົວ. ໃນສະພາບຄືແນວນັ້ນ, ມັນຈຶ່ງມີຄວາມຕ້ອງການປຶກສາຄົ້ນຄວ້າບັນຫາເຫຼົ່ານີ້ໃນລະດັບຊຸມຊົນ. ບາດກ້າວທໍາອິດຈະແມ່ນການກໍານົດເອົາສະຖານທີ່ ທີ່ຊັກນໍາຫຼາຍກວ່າໝູ່ ແລະ ວິທີທາງທີ່ມີປະສິດທິຜົນເພື່ອຍົກບັນຫາຂື້ນ.

**ບົດຝຶກຫັດ II - ການຫຼີ້ນພາລະບົດບາດ: ການແນະນໍາບັນຫາການແບ່ງວຽກຢູ່ໃນເຮືອນ (20 ນາທີ)**

ຈຸດປະສົງແມ່ນເພື່ອສະເໜີວິທີທາງທີ່ເໝາະສົມ ແລະ ສະຖານທີ່ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ເລີ້ມການປຶກສາຄົ້ນຄວ້າກ່ຽວກັບບັນຫາວຽກຄົວເຮືອນ.

1. ແບ່ງຜູ້ເຂົ້າຮ່ວມອອກເປັນ 3 ກຸ່ມ ແລະ ໃຫ້ແຕ່ລະກຸ່ມສະແດງບົດບາດສົມມຸດອອກ.
    - ບົດບາດສົມມຸດ 1– ແນະນໍາບັນຫາໃຫ້ແກ່ກຸ່ມຄອບຄົວ
    - ບົດບາດສົມມຸດ 2– ແນະນໍາ ບັນຫາໃຫ້ແກ່ກຸ່ມຊຸມຊົນ
    - ບົດບາດສົມມຸດ 3– ແນະນໍາ ບັນຫາ ໃຫ້ແກ່ກຸ່ມ ຂອງແມ່ຍິງ
2. ປຶກສາຄົ້ນຄວ້າ ບົດບາດສົມມຸດ ທີ່ດີກວ່າໝູ່ ແລະ ເງື່ອນໄຂເພື່ອປຶກສາຄົ້ນຄວ້າບັນຫາ.

**ການປຶກສາຄົ້ນຄວ້າ: (10 ນາທີ)**

ມັນເປັນທີ່ຈະແຈ້ງແລ້ວວ່າໂດຍທົ່ວໄປແລ້ວແມ່ຍິງໄດ້ແບກຫາບວຽກຄົວເຮືອນໜັກເກີນໄປ ສະນັ້ນ ພວກເພິ່ນຈຶ່ງບໍ່ມີເວລາເຂົ້າຮ່ວມກອງປະຊຸມ ຫຼື ໄປສະຖານທີ່ອື່ນໆ ສຳລັບແຜນງານການເປີດຮັບ. ສິ່ງເຫຼົ່ານີ້ແມ່ນສະຖານທີ່ ທີ່ສາມາດໃຫ້ໂອກາດແກ່ແມ່ຍິງ ເພື່ອສະແດງທັດສະນະຂອງຕົນ ແລະ ມີສຽງໃນການຕັດສິນບັນຫາທີ່ກະທົບຕໍ່ແມ່ຍິງ ແລະ ສັງຄົມ. ຖ້າຫາກວ່າສະພາບນີ້ບໍ່ໄດ້ປ່ຽນແປງ, ແມ່ຍິງລຸ້ນນີ້ ແລະ ລຸ້ນຕໍ່ໆໄປກໍຈະສືບຕໍ່ຖືກຈຳແນກ ແລະ ບໍ່ສາມາດທີ່ຈະມີຕຳແໜ່ງຢູ່ໃນສັງຄົມ.

**ບົດຝຶກຫັດ III –ການປຶກສາຄົ້ນຄວ້າເປັນກຸ່ມ: ການເຮັດໃຫ້ເກີດມີການປ່ຽນແປງ (30 ນາທີ)**

1. ການປຶກສາຄົ້ນຄວ້າສາມາດເຮັດເປັນກຸ່ມດຽວໃຫຍ່ລວມໝົດທຸກຄົນ. ຜູ້ອຳນວຍຄວາມສະດວກຖອດຖອນເອົາຄວາມຄິດຂອງຜູ້ເຂົ້າຮ່ວມກ່ຽວກັບຄຳຖາມຕໍ່ໄປນີ້:
    - ແມ່ນການປ່ຽນແປງປະເພດໃດມີຄວາມເປັນໄປໄດ້?
    - ຈະສາມາດເຮັດຫຍັງໄດ້ແດ່ເພື່ອປ່ຽນແປງສະພາບດັ່ງກ່າວ?
2. ປຶກສາຄົ້ນຄວ້າຂໍ້ສະໜັບສະໜູນ ແລະ ຂໍ້ຄັດຄ້ານຂອງການປ່ຽນແປງຕໍ່ໄປນີ້. ສຳນຶກເບິ່ງຄຳຕອບດ້ວຍການຂຽນຂໍ້ສະໜັບສະໜູນ ແລະ ຂໍ້ຄັດຄ້ານໃສ່ບັດ ແລະ ຕິດໃສ່ຖັນທີ່ເໝາະສົມສຳລັບແຕ່ລະການປ່ຽນແປງ.
    - ວ່າຈ້າງ ຄົນຊ່ວຍວຽກເຮືອນ.
    - ຊື້ເຄື່ອງປະດັບເຮືອນຊານແບບສະໄໝໃໝ່.
    - ອົບຮົມເດັກນ້ອຍຜູ້ຊາຍໃຫ້ເຮັດວຽກເຮືອນຕັ້ງແຕ່ໄວໜຸ່ມ.
    - ຂໍຮ້ອງໃຫ້ຜູ້ຊາຍເຮັດວຽກຄົວກິນ ແລະ ອະນາໄມຢູ່ໃນເຮືອນ.
    - ຂໍຮ້ອງໃຫ້ຜູ້ຊາຍໄປຫາຟືນ ແລະ ຕັກນ້ຳໃນໄລຍະຊຸມຊົນມີກິດຈະກຳ ຫຼື ເມື່ອເວລາການຈັດຕັ້ງມີການມີງານ.
    - ອົບຮົມທັດສະນະຄະຕິສຳລັບຜູ້ຊາຍ ທີ່ຢາກຈະຊ່ວຍແມ່ຍິງໃນວຽກເຮືອນຂອງພວກເພິ່ນ ແລະ ບໍ່ໃຫ້ສະແດງຄວາມບໍ່ພໍໃຈ ຫຼື ຫົວເລາະພວກເພິ່ນ.
3. ຜູ້ອຳນວຍຄວາມສະດວກສະຫຼຸບສັງລວມຜົນການປຶກສາຄົ້ນຄວ້າຂອງກຸ່ມ ແລະ ກ່າວເຖິງຈຸດປະສົງຂອງວາລະທີ່ພົວພັນ.

# ບົດທີ8

# ກົດໝາຍ  ແລະນະໂຍບາຍຂອງຊາດກ່ຽວ
# ກັບແມ່ຍິງແລະການເຂົ້າຮ່ວມຂອງແມ່ຍິງໃນການຕັດສິນບັນຫາ
# ໃນລະດັບຊາດ

*ວັດຖຸປະສົງ:*

1. ເພື່ອໃຫ້ມີຄວາມຄຸ້ນເຄີຍກັບກົດໝາຍ ແລະ ນະໂຍບາຍຂອງຊາດທີ່ມີຢູ່ແລ້ວກ່ຽວກັບແມ່ຍິງ ແລະ ປະຊາຊົນບັນດາຊົນເຜົ່າ.
2. ເພື່ອວິເຄາະຂໍ້ດີ ແລະ ຂໍ້ຈຳກັດຂອງກົດໝາຍ ແລະ ນະໂຍບາຍດັ່ງກ່າວ.
3. ເພື່ອສຳຫຼວດເບິ່ງໂອກາດທີ່ເປັນໄປໄດ້ເພື່ອສະໜັບສະໜູນ ແລະ ສົ່ງເສີມການເຂົ້າຮ່ວມຂອງແມ່ຍິງ ໃນການຕັດສິນບັນຫາໃນລະດັບຊາດ.

*ເວລາ:* 1 ຊົ່ວໂມງ 30 ນາທີ



# ກົດໝາຍ ແລະນະໂຍບາຍຂອງຊາດກ່ຽວກັບແມ່ຍິງແລະການເຂົ້າຮ່ວມຂອງແມ່ຍິງໃນການຕັດສິນບັນຫາໃນລະດັບຊາດ

**ການນຳສະເໜີ ແລະ ການປຶກສາຄົ້ນຄວ້າ: (30 ນາທີ)**

ມີກົດໝາຍ ແລະ ນະໂຍບາຍຂອງຊາດທີ່ອາດສາມາດມີທັງຂໍ້ດີ ແລະ ຂໍ້ເສຍແກ່ແມ່ຍິງ ແລະ ການເຂົ້າຮ່ວມຂອງພວກເພິ່ນໃນການຕັດສິນບັນຫາ. ມີຕົວຢ່າງຈຳນວນໜຶ່ງຈາກປະເທດຕ່າງໆທີ່ສາມາດເອົາມານຳຂຶ້ນມາກ່າວ. ໂດຍສະເພາະແມ່ນການວິເຄາະກົດໝາຍພັດທະນາ ແລະ ປົກປ້ອງແມ່ຍິງ ແລະ ນະໂຍບາຍສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ.

ເຊັ່ນຕົວຢ່າງ, ຢູ່ປະເທດຟີລິບປິນ, ບົດບາດຍິງ-ຊາຍ ແລະ ບັນທັດຖານການພັດທະນາຮຽກຮ້ອງຕ້ອງການໃຫ້ອົງການຈັດຕັ້ງຂອງລັດ ແລະ ໜ່ວຍງານ ຂອງອົງການປົກຄອງທ້ອງຖິ່ນທັງໝົດວາງງົບປະມານສະເພາະຄື 5% ຂອງງົບປະມານທັງໝົດສຳລັບກິດຈະກຳບົດບາດຍິງ-ຊາຍ ແລະ ການພັດທະນາທີ່ໃຫ້ຜົນປະໂຫຍດແກ່ແມ່ຍິງ. ນະໂຍບາຍນີ້ສາມາດເປັນຂໍ້ດີຖ້າຫາກວ່າກອງທຶນໄດ້ຖືກເອົາມານຳໃຊ້ຢ່າງຖືກຕ້ອງສຳລັບໂຄງການ ຫຼື ກິດຈະກຳທີ່ເວົ້າເຖິງຄວາມຕ້ອງການ ແລະ ຄວາມກັງວົນຂອງແມ່ຍິງຢ່າງແທ້ຈິງ. ເຖິງຢ່າງໃດກໍດີເມື່ອເວລາບໍ່ຖືກເອົາມານຳໃຊ້ຢ່າງຖືກຕ້ອງກອງທຶນກໍສາມາດເປັນການຫວ່ານເງິນຖິ້ມໃສ່ກິດຈະກຳທີ່ບໍ່ມີຄວາມໝາຍໂດຍອອກຊື່ "ບົດບາດຍິງ-ຊາຍ ແລະ ການພັດທະນາ". ມັນຍັງມີຄະນະກຳມະທິການແຫ່ງຊາດກ່ຽວກັບບົດບາດຂອງແມ່ຍິງຟີລິບປິນ ໃນລະດັບຊາດນຳອີກທີ່ເຄື່ອນໄຫວເປັນອົງກອນທີ່ປຶກສາພາຍໃຕ້ສຳນັກງານຂອງປະທານປະເທດນອກຈາກຈຸດເລັ່ງທາງດ້ານບົດບາດຍິງ-ຊາຍໃນຫຼາຍໆອົງກອນຂອງລັດຖະບານ. ທັງນີ້ກົດໝາຍໃໝ່, "ກົດໝາຍວ່າດ້ວຍການຕ້ານຄວາມຮຸນແຮງຕໍ່ແມ່ຍິງ ແລະ ເດັກນ້ອຍ" ປີ 2004 ກຳນົດມາດຕະການເພື່ອປົກປ້ອງແມ່ຍິງ ແລະ ເດັກນ້ອຍຈາກການຂົ່ມເຫງຕໍ່ຮ່າງກາຍ ແລະ ຄວາມຮູ້ສຶກຈາກຜົວ ຫຼື ຈາກຄູ່ຄອງຂອງພວກເພິ່ນ ແລະ ກຳນົດການລົງໂທດຜູ້ກະທຳຜິດ.

ກົດໝາຍ ແລະ ນະໂຍບາຍທີ່ມີຄວາມສຳຄັນກວ່າໝູ່ຂອງປະເທດຈຳນວນໜຶ່ງ ຊຶ່ງມີຄວາມສຳຄັນເພື່ອໃຫ້ຜູ້ເຂົ້າຮ່ວມຄວນຮູ້ໃນປະເທດຂອງຕົນສາມາດເອົາມານຳສະເໜີໃນຮູບແບບພາບ, ໂດຍມີລັກສະນະພິເສດໃຫຍ່ໆຂອງກົດໝາຍ ແລະ ລັກສະນະພິເສດນີ້ພົວພັນເຖິງແມ່ຍິງຊົນເຜົ່າແນວໃດ.

**ບົດຝຶກຫັດ I–ການເກັບກຳຂໍ້ຄິດເຫັນ: ຂໍ້ດີ ແລະ ຂໍ້ຈຳກັດຂອງກົດໝາຍ ແລະ ນະໂຍບາຍຂອງປະເທດ (30 ນາທີ)**

1. ກ່ອນຈະເຂົ້າໄປໄຈ້ແຍກຂໍ້ດີ ແລະ ຂໍ້ຈຳກັດ ຜູ້ອຳນວຍຄວາມສະດວກຈະຕ້ອງໄດ້ອະທິບາຍບັນດາກົດໝາຍ ແລະ ນະໂຍບາຍແຫ່ງຊາດສາກອ່ນເຊັ່ນ: ກົດໝາຍວ່າດວ້ຍການພັດທະນາ ແລະປົກປອ້ງແມ່ຍິງ ແລະ ເດັກຍິງ, ນະໂຍບາຍສົ່ງເສີມຄວາມກ້າວຂອງແມ່ຍິງທີ່ທາງ ລັດຖະບານໄດ້ຮອງຮັບ.
2. ຜູ້ເຂົ້າຮ່ວມໄດ້ຮັບບັດຄຳ 2 ສີ. ຂໍຮ້ອງໃຫ້ພວກເພິ່ນຂຽນລົງໃສ່ບັດກ່ຽວກັບຂໍ້ດີ ແລະ ຂໍ້ຈຳກັດຂອງກົດໝາຍ ແລະ ນະໂຍບາຍຂອງຊາດທີ່ໄດ້ປຶກສາຄົ້ນຄວ້າໃນເບື້ອງຕົ້ນ. 1ສີສຳລັບຂໍ້ດີ ແລະ ອີກ 1ສີສຳລັບຂໍ້ຈຳກັດ.
3. ພາຍຫຼັງຂຽນແລ້ວ, ຜູ້ເຂົ້າຮ່ວມເອົາບັດຂອງຕົນຕິດໃສ່ກະດານ, ຂໍ້ດີ ຢູ່1ຖັນ ແລະ ຂໍ້ຈຳກັດຢູ່ອີກຖັນໜຶ່ງ.
4. ຜູ້ອຳນວຍຄວາມສະດວກອ່ານຄຳຕອບ, ນຳພາການປຶກສາຄົ້ນຄວ້າ ແລະ ສະຫຼຸບສັງລວມອົງປະກອບທີ່ສຳຄັນຂອງຂໍ້ໄດ້ປຽບ ແລະ ຂໍ້ຈຳກັດຂອງກົດໝາຍ ແລະ ນະໂຍບາຍຂອງຊາດ.

ພວກເຮົາສາມາດຂະຫຍາຍຂໍ້ໄດ້ປຽບ ແລະ ໂອກາດທີ່ກົດໝາຍ ແລະ ນະໂຍບາຍຂອງຊາດໄດ້ມີໃຫ້, ໃນເວລາດຽວກັນກໍຮູ້ໄດ້ຂໍ້ຈຳກັດຂອງມັນ. ເຊັ່ນຕົວຢ່າງ, ພວກເຮົາສາມາດນຳໃຊ້ອົງກອນທີ່ມີຢູ່ແລ້ວໃນລະດັບຊາດເປັນສະຖານທີ່ ທີ່ມີຄວາມເປັນໄປໄດ້ເພື່ອເອົາບັນຫາຂອງແມ່ຍິງຊົນເຜົ່າມາໃຫ້ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງເອົາໃຈໃສ່. ໃນເວລາດຽວກັນ, ພວກເຮົາກໍຕ້ອງມີຄວາມຄາດຫວັງທີ່ແທດເໝາະກັບສະພາບຄວາມເປັນຈິງກ່ຽວກັບວ່າອົງກອນເຫຼົ່ານີ້ສາມາດເຮັດຫຍັງໄດ້ຫຼືວ່າ ມີວິກິດການ ຍ້ອນມັນມີຂໍ້ຈຳກັດ.

**ບົດຝຶກຫັດ II– ການປຶກສາຄົ້ນຄວ້າເປັນກຸ່ມ: ການເອົາປະໂຫຍດຈາກໂອກາດເພື່ອໃຫ້ມີການສະໜັບສະໜູນໃນລະດັບຊາດ (30 ນາທີ)**

1. ແບ່ງຜູ້ເຂົ້າຮ່ວມອອກເປັນກຸ່ມຍ່ອຍ. ແຕ່ລະກຸ່ມປຶກສາຄົ້ນຄວ້າ ແລະ ຕອບຄຳຖາມຕໍ່ໄປນີ້: (20 ນາທີ)

*ໂອກາດທີ່ສາມາດຫາໄດ້ເພື່ອໃຫ້ມີການສະໜັບສະໜູນໃນລະດັບທ້ອງຖິ່ນ/ຊາດມີຫຍັງແດ່?*

*ແມ່ຍິງຊາວຊົນເຜົ່າຈະສາມາດເອົາຜົນປະໂຫຍດຈາກໂອກາດເຫຼົ່ານີ້ໄດ້ແນວໃດ?*

2. ກຸ່ມລາຍງານຜົນຂອງການປຶກສາຄົ້ນຄວ້າຂອງຕົນ. (10 ນາທີ)
3. ຜູ້ອຳນວຍຄວາມສະດວກສະຫຼຸບສັງລວມຈຸດໃຫຍ່ໆ ຂອງການລາຍງານ.

# ບົດທີ9

## ຍຸດທະສາດເພື່ອເອົາແມ່ຍິງຢູ່ໃນຕຳແໜ່ງຕັດສິນບັນຫາ

*ວັດຖຸປະສົງ:*

1. ເພື່ອສຶກສາເບິ່ງຂໍ້ສະໜັບສະໜູນ ແລະ ຂໍ້ຄັດຄ້ານໃນການຍົກເອົາບົດບາດ ແລະ ຄວາມຮັບຜິດຊອບມາຢູ່ໃນວົງການຂອງລັດ ແລະ ຄົ້ນຄວ້າເບິ່ງອຸປະສັກທີ່ໄດ້ພະເຊີນ.
2. ເພື່ອສຶກສາເບິ່ງຕຳແໜ່ງຂອງພວກເຮົາເອງຢູ່ໃນຊຸມຊົນຂອງພວກເຮົາ ແລະ ຖອດຖອນເອົາຍຸດທະສາດທີ່ເໝາະສົມຈຳນວນໜຶ່ງ ເພື່ອປັບປຸງຕຳແໜ່ງໃນການຕັດສິນບັນຫາຂອງພວກເຮົາຢູ່ໃນສັງຄົມ.
3. ເພື່ອສຳຫຼວດວິທີທາງໃນການຂະຫຍາຍກວ້າງຂອບເຂດການຕັດສິນບັນຫາ ເພື່ອໃຫ້ມີອິດທິພົນຕໍ່ຜູ້ຕັດສິນບັນຫາຢູ່ໃນຊຸມຊົນ ແລະ ອົງການປົກຄອງທ້ອງຖິ່ນ.

*ເວລາ:* 1 ຊົ່ວໂມງ 40 ນາທີ



# ຍຸດທະສາດເພື່ອເອົາແມ່ຍິງມາຢູ່ໃນຕຳແໜ່ງຕັດສິນບັນຫາ

ບົດຝຶກຫັດ I - ກໍ່ຕັ້ງຄະນະກຳມະການເພື່ອງານວັດທະນະທຳໃນຍາມແລງ (10 ນາທີ)

- **ບົດຝຶກຫັດຕົວຈິງເພື່ອສັງເກດເບິ່ງເຫດຜົນໃນການເລີ້ມບົດບາດ ແລະ ຄວາມຮັບຜິດຊອບ**

1. ເລີ້ມບົດຝຶກຫັດໂດຍບໍ່ບອກໃຫ້ຜູ້ເຂົ້າຮ່ວມຊາບວ່າມັນແມ່ນພາກສ່ວນໜຶ່ງຂອງວາລະ. ແຈ້ງໃຫ້ພວກເພິ່ນຊາບໃນງານວັດທະນະທຳຄືນນີ້ ຊຶ່ງເປັນບ່ອນທີ່ທຸກໆຄົນຈະຕ້ອງການຢາກຈະແບ່ງປັນວັດທະນະທຳ, ອາຫານ ແລະ ກິດຈະກຳອື່ນໆຂອງຕົນ. ພວກເພິ່ນໄດ້ຮັບການສະໜັບສະໜູນໃຫ້ກໍ່ຕັ້ງຄະນະກຳມະການຈັດງານ, ຊຶ່ງພວກເພິ່ນສາມາດເອົາບົດບາດຕໍ່ໄປນີ້:
   - **ໂຄສົກໃນພິທີ**
   - **ກະກຽມແຜນງານ**
   - **ຮັບຜິດຊອບອາຫານ**
   - **ຮັບຜິດຊອບກະກຽມສະຖານທີ່**
   - **ກ່າວສູນທອນພິດສັ້ນໆ ສະແດງຄວາມຂອບໃຈແກ່ເຈົ້າພາບທ້ອງຖິ່ນຕາງໜ້າໃຫ້ແກ່ຜູ້ເຂົ້າຮ່ວມທັງໝົດ**

2. ສັງເກດເບິ່ງວ່າຜູ້ເຂົ້າຮ່ວມຄັດເລືອກເອົາຄວາມຮັບຜິດຊອບເຫຼົ່ານີ້ແນວໃດ ຫຼື ພວກເພິ່ນມີຄວາມກຽມພ້ອມແນວໃດທີ່ຈະເລີ່ມຕຳແໜ່ງ/ຄວາມຮັບຜິດຊອບ.

**ການປຶກສາຄົ້ນຄວ້າ:**

ເມື່ອເວລາພວກເຮົາສຶກສາເບິ່ງແນວຄວາມຄິດຂອງຕຳແໜ່ງຢູ່ໃນສັງຄົມ ຊົນເຜົ່າ, ພວກເຮົາຕ້ອງໄດ້ເບິ່ງຂໍ້ສະໜັບສະໜູນ ແລະ ຂໍ້ຄັດຄ້ານໃນການເລີ່ມບົດບາດ ແລະ ຄວາມຮັບຜິດຊອບຢູ່ໃນວົງການຂອງລັດ ແລະ ຄຳນຶງເຖິງອຸປະສັກທີ່ພວກເຮົາພະເຊີນໜ້າ.

ກ່ອນອື່ນໝົດ, ມັນມີຄວາມສຳຄັນທີ່ຈະຕ້ອງໄດ້ຮັບຮູ້ສະພາບທີ່ອັດຕະຄັດຈຳນວນໜຶ່ງຢູ່ພາຍໃນພວກເຮົາເມື່ອເວລາພວກເຮົາເລີ່ມຕົ້ນບົດບາດ ແລະ ຄວາມຮັບຜິດຊອບໃນວົງການຂອງລັດ.

**ບົດຝຶກຫັດ II- ວາລະສິ່ງຂ່າວ: ສະພາບທີ່ອັດຕະຄັດ ຊຶ່ງພວກເຮົາຈະພະເຊີນໜ້າເມື່ອເວລາມີຄວາມຮັບຜິດຊອບ (20 ນາທີ)**

1. ທວນຄືນສິ່ງທີ່ເກີດຂື້ນຢູ່ໃນບົດຝຶກຫັດ I. ຖາມຜູ້ເຂົ້າຮ່ວມເຖິງເຫດຜົນເປັນຫຍັງ? ຈຳນວນໜຶ່ງຈຶ່ງເອົາຄວາມຮັບຜິດຊອບ ແລະ ເປັນຫຍັງຜູ້ອື່ນ ຈຶ່ງຢູ່ເສີຍໆກ່ຽວກັບການກໍ່ຕັ້ງຄະນະກຳມະການຈັດງານ.ບໍ່ຈຳເປັນຕ້ອງລົງລະອຽດພຽງແຕ່ພະຍາຍາມພຽງແຕ່ຮຽກເອົາບາງຄວາມຄິດກ່ຽວກັບຂໍ້ສະໜັບສະໜູນ ແລະ ຂໍ້ຄັດຄ້ານໃນການເອົາບົດບາດ ແລະ ຄວາມຮັບຜິດຊອບ.
2. ຜູ້ອຳນວຍຄວາມສະດວກສາມາດທວນຄືນເຊັ່ນດຽວກັນຜົນຂອງວາລະ 1 ກ່ຽວກັບແມ່ຍິງ ແລະ ການຕັດສິນບັນຫາຢູ່ໃນຊຸມຊົນກ່ຽວກັບວ່າເປັນຫຍັງ ແມ່ຍິງຈຶ່ງບໍ່ມີຄວາມມຸ່ງມາດປາດຖະໜາຢາກສິນໃຈຕຳແໜ່ງຕັດສິນບັນຫາ.
3. ປຶກສາຄົ້ນຄວ້າສະພາບທີ່ອັດຕະຄັດຕ່າງໆ ທີ່ແມ່ຍິງຊິນເຜົ່າພະເຊີນໜ້າເມື່ອເວລາເຮັດວຽກກ່ຽວກັບບົດບາດ ແລະ ຄວາມຮັບຜິດຊອບ. ຈິນຕະນາພາບເບິ່ງຄຳຕອບຂອງພວກເພິ່ນດ້ວຍການຂຽນຄຳຕອບເຫຼົ່ານີ້ລົງໃສ່ກະດານ. ບາງບັນຫາສາມາດລວມເຖິງ:
    - ***ຄວາມຢ້ານກົວຂອງແມ່ຍິງທີ່ຈະຮັບພາລະ ແລະ ແບກຫາບຫຼາຍເກີນໄປ***
    - ***ສະພາບທີ່ອັດຕະຄັດກັບຄວາມຮັບຜິດຊອບຄອບຄົວ***
    - ***ບໍ່ມີ ການສະໜັບສະໜູນຂອງຄອບຄົວ***
    - ***ຂາດຄວາມເຊື່ອໝັ້ນ***
    - ***ຂາດຄວາມຊຳນິຊຳນານ***
    - ***ມີທີທ່າວ່າ "ປ່ອຍໃຫ້ຜູ້ອື່ນເຮັດ"***
    - ***ມີແນວໂນ້ມຂື້ນກັບຜູ້ນຳ***
    - ***ຄວາມຢ້ານກົວຈະຖືກວິພາກວິຈານ***
4. ປຶກສາຄົ້ນຄວ້າ ແລະ ຄົ້ນຄວ້າລົງເລິກເບິ່ງວ່າຈະສາມາດຜ່ານຜ່າສະພາບທີ່ອັດຕະຄັດເຫຼົ່ານີ້ໄດ້ແນວໃດດ້ວຍການຂຽນຄຳຕອບລົງໃສ່ບັດຄຳ ແລະ ຕິດບັດຄຳນີ້ໃສ່ກະດານ.

**ການປຶກສາຄົ້ນຄວ້າ:**

ບາດນີ້ພວກເຮົາມາສັງເກດເບິ່ງຕຳແໜ່ງຂອງພວກເຮົາເອງຢູ່ໃນຊຸມຊົນຂອງພວກເຮົາ ແລະ ຖອດຖອນເອົາຍຸດທະສາດທີ່ເໝາະສົມຈຳນວນໜຶ່ງ ເພື່ອປັບປຸງຕຳແໜ່ງໃນການຕັດສິນບັນຫາຂອງພວກເຮົາຢູ່ໃນສັງຄົມ.

ຄືດັ່ງທີ່ໄດ້ປຶກສາຄົ້ນຄວ້າຢູ່ໃນວາລະກ່ອນ, ແບບສະບັບຂອງສັງຄົມກ່ຽວກັບແມ່ຍິງ ແລະ ການຕັດສິນບັນຫາອາດມີການຈຳກັດຄວາມສົນໃຈຂອງແມ່ຍິງເຊັ່ນດຽວກັນ ໃນການຄອງຕຳແໜ່ງຢູ່ໃນວົງການລັດ. ຖ້າຫາກພວກເຮົາຮັບຮູ້ວ່າສິ່ງສຳຄັນທີ່ສຸດ ການມີສ່ວນຮ່ວມຢູ່ໃນໂຄງປະກອບຂອງການຕັດສິນບັນຫາຢູ່ໃນຊຸມຊົນ ແລະ ຢູ່ນອກຊຸມຊົນ (ຕົວຢ່າງເຊັ່ນການຈັດຕັ້ງ, ໂຄງປະກອບທາງດ້ານການເມືອງ ແລະ ຂອງອົງການປົກຄອງທ້ອງຖິ່ນ, ສະນັ້ນມັນຈຶ່ງມີຄວາມສຳຄັນທີ່ຈະຕ້ອງໄດ້ແກ້ໄຂແບບສະບັບລຳອຽງ ແລະ ປະກາດໃຫ້ແມ່ຍິງເຂົ້າຢູ່ໃນຕຳແໜ່ງຕັດສິນບັນຫາ.

**ບົດຝຶກຫັດ III- ກອງປະຊຸມປຶກສາຫາລື: ພວກເຮົາຈະເອົາແມ່ຍິງເຂົ້າມາຢູ່ໃນຕຳແໜ່ງຕັດສິນບັນຫາໄດ້ແນວໃດ? (1 ຊົ່ວໂມງ)**

**1. ແບ່ງຜູ້ເຂົ້າຮ່ວມອອກເປັນກຸ່ມຍ່ອຍ. ຂໍຮ້ອງໃຫ້ພວກເພິ່ນປຶກສາຄົ້ນຄວ້າຄຳຖາມຕໍ່ໄປນີ້:** (30 ນາທີ)

- ຈະສາມາດເຮັດຫຍັງໄດ້ແດ່ ເພື່ອເອົາແມ່ຍິງຊົນເຜົ່າເຂົ້າມາຢູ່ໃນຕຳແໜ່ງຕັດສິນບັນຫາຢູ່ໃນຊຸມຊົນ ແລະ ການຈັດຕັ້ງ?
- ແມ່ຍິງ ສາມາດເຮັດຫຍັງໄດ້ແດ່ເພື່ອໃຫ້ມີອິດທິພົນໃນການຕັດສິນບັນຫາຢູ່ໃນຊຸມຊົນ ແລະ ແກ້ໄຂບັນຫາຂອງແມ່ຍິງທີ່ກຳລັງພະເຊີນຢູ່?

2.ກຸ່ມສະເໜີຜົນຂອງການປຶກສາຄົ້ນຄວ້າຂອງພວກເພິ່ນທີ່ໄດ້ຂຽນລົງໃສ່ໃນເຈ້ຍແຂງ.(20 ນາທີ)

3. ຜູ້ອຳນວຍຄວາມສະດວກສະຫຼຸບສັງລວມຄຳຕອບ ແລະ ລວມເອົາບາງຄຳແນະນຳຕໍ່ໄປນີ້ກ່ຽວກັບວ່າແມ່ຍິງສາມາດ ເອົາພວກເພິ່ນເອງເຂົ້າມາຢູ່ໃນຕຳແໜ່ງຕັດສິນບັນຫາໄດ້ແນວໃດ ແລະ ພວກເພິ່ນຈະສາມາດມີອິດທິພົນຕໍ່ການຕັດສິນບັນຫາຢູ່ໃນຊຸມຊົນ ແລະ ການຈັດຕັ້ງໄດ້ແນວໃດ (10 ນາທີ)

- **ລວມເອົາບາງຂໍ້ກຳນົດຢູ່ໃນກົດລະບຽບຂອງການຈັດຕັ້ງ ແລະ ຫຼັກການໂດຍວາງຄວາມສົມດູນຂອງບົດບາດຍິງ-ຊາຍ ເພື່ອເຊີນຜູ້ນຳຂອງແມ່ຍິງມາເອົາຕຳແໜ່ງ.**
- **ຂໍຮ້ອງໃຫ້ສະພາຕາມປະເພນີ ລວມເອົາແມ່ຍິງເຂົ້າຮ່ວມນຳໂດຍຖືວ່າມັນເປັນບັນຫາຂອງ ຄວາມເປັນທຳ.**
- **ກະກຽມສະເໜີຕົວແມ່ຍິງລ່ວງໜ້າເພື່ອຍອມຮັບເອົາຕຳແໜ່ງຖ້າຫາກວ່າພວກເພິ່ນຖືກສະເໜີຊື່.**
- **ແນະນຳຊັກຊວນຜູ້ອອກສຽງ/ຊຸມຊົນ ໃຫ້ເລືອກເອົາຜູ້ນຳຂອງແມ່ຍິງ**
- **ການອ້າງສິດທິຂອງແມ່ຍິງຕ້ອງນອນຢູ່ໃນການຕັດສິນບັນຫາ**
- **ທັດສະນະວິໄນຂອງຜູ້ນຳຂອງແມ່ຍິງຢູ່ໃນກິດຈະກຳຂອງການຈັດຕັ້ງ/ຊຸມຊົນ.**

**□ານສັງເຄາະ: (10 ນາທີ)**

ຂະບວນ□ານ□ານຕັດສິນບັນຫາແບບປະເພນີ ແມ່ນພິເສດທີ່ສຸດໃນເຫດຜົນທີ່ວ່າ□ານຕັດສິນບັນຫາແມ່ນໄດ້ເຮັດ ໂດຍ□ານມີສ່ວນຮ່ວມໝົດທຸ□ຄົນໃນຊຸມຊົນ, ບໍ່ພຽງແຕ່ແມ່ນໂດຍສະພາຂອງຜູ້ສູງອາຍຸເທົ່ານັ້ນ. ສັງຄົມຊົນເຜົ່າມີ□ົນໄ□ທີ່ບໍ່ເປັນທາງ□ານ ຊຶ່ງໃນນັ້ນຄວາມເປັນເອ□ະພາບແມ່ນສາມາດບັນລຸໄດ້ພາຍຫຼັງການຫາລື ແລະ □ານປຶ□ສາຄົ້ນຄວ້າຫຼາຍຄັ້ງ, ສ່ວນຫຼາຍແມ່ນດ້ວຍ□ານຊຸມນຸມສັງຄົມ. ຢູ່ໃນບາງສັງຄົມ, ແມ່ນມີສະຖານທີ່ສຳລັບ□ານປຶ□ສາຄົ້ນຄວ້າເລື່ອງລາວ ແລະ ບັນຫາຕ່າງໆເປັນຕົ້ນຢູ່ໃນ *ມົວຣັງ* (ນາ□າ), ແດເພ (ແຄນຄະແນ) ຫຼືກອງປະຊຸມພິເສດເປັນຕົ້ນ ໃນບັນດາໄອແບນ. ຢູ່ໃນສັງຄົມສ່ວນໃຫຍ່, □ານລົມ□ັນຢ່າງບໍ່ເປັນທາງ□ານຂອງສັງຄົມຕົວຢ່າງເຊັ່ນໃນໄລຍະດື່ມ, □ິນ, ພິທີ□ິນດອງ, ພິທີສິ່ງສະ□ານ ຫຼື ພຽງແຕ່ນັ່ງອ້ອມກອງໄຟແບບງ່າຍດາຍ □ໍແມ່ນໂອ□າດສຳລັບ□ານປະ□ອບຄຳຄິດຄຳເຫັນ.

ສິ່ງເຫຼົ່ານີ້□ໍສາມາດເປັນໂອ□າດທີ່ແມ່ຍິງ ແລະ ຜູ້ຊາຍທຳມະດາທີ່ໄດ້ຮັບມອບອຳນາດຢູ່ໃນສັງຄົມຊາວຊົນເຜົ່າສາມາດ ມີອິດທິພົນຕໍ່ຜູ້ຕັດສິນບັນຫາຢູ່ໃນຊຸມຊົນ ແລະ ເຈົ້າໜ້າທີ່ຂອງອົງການປົ□ຄອງທ້ອງຖິ່ນ□່ຽວ□ັບຫຼາຍໆ ບັນຫາບົດບາດຍິງ-ຊາຍ. ໂອ□າດດັ່ງກ່າວນີ້ຕ້ອງ□ຳນົດໃຫ້ໄດ້ ແລະ ຍຸດທະສາດທີ່ໄດ້ພັດທະນາເພື່ອ□່ໃຫ້ເ□ີດມີ□ານປ່ຽນແປງໂຄງສ້າງເຫຼົ່ານີ້. □ານປ່ຽນແປງເຫຼົ່ານີ້ສາມາດໃຫ້ແມ່ຍິງໄດ້ມີໂອ□າດຫຼາຍຂື້ນໃນຕຳແໜ່ງຕັດສິນບັນຫາ, ຫຼືພຽງແຕ່ມີອິດທິພົນຕໍ່ຜູ້ອື່ນເພື່ອຕັດສິນບັນຫາທີ່ມີຄວາມເຄື່ອນໄຫວຕໍ່ບົດບາດຍິງຊາຍ.  ຢູ່ໃນ□ານຈັດຕັ້ງຂອງຊຸມຊົນ, ແມ່ຍິງ ແລະ ຜູ້ຊາຍ ທີ່ໄດ້ຮັບມອບອຳນາດ□ໍສາມາດຈັດ□ານຝຶ□ອົບຮົມ ຫຼື ກອງປະຊຸມປຶ□ສາຫາລືໃຫ້ແ□່ຊຸມຊົນ. ສະຖາບັນ□ານປົກຄອງທ້ອງຖິ່ນ□ໍສາມາດໄດ້ຮັບ□ານສະໜັບສະໜູນເພື່ອຮັບປະ□ັນໃຫ້□ານຕັດສິນທີ່ໄດ້ເຮັດ□່ຽວ□ັບບັນຫາຂອງແມ່ຍິງແມ່ນຄວາມເປັນຫ່ວງເປັນໄຍຂອງຊຸມຊົນທັງໝົດ.

# ບົດທີ10

## ແຜນຕິດຕາມກິດຈະກຳ

## ແຜນຕິດຕາມ

*ຈຸດປະສົງ:*

1. ສະໜັບສະໜູນກິດຈະກຳ ແລະ ສະໜັບສະໜູນການຕິດຕາມ, ໂດຍສະເພາະແມ່ນເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ແບ່ງປັນສິ່ງທີ່ພວກເພິ່ນໄດ້ຮ່ຳຮຽນຢູ່ໃນການຝຶກອົບຮົມກັບຊຸມຊົນ ຂອງພວກເພິ່ນ.
2. ເພື່ອກຳນົດກິດຈະກຳ ແລະ ສະໜັບສະໜູນການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ເຄືອຂ່າຍຂອງແມ່ຍິງຊົນເຜົ່າ.

**ເວລາ: 1 ຊົ່ວໂມງ 30 ນາທີ**

*ກິດຈະກຳ:*

**ບົດຝຶກຫັດ I ການປຶກສາຄົ້ນຄວ້າ: ແຜນຕິດຕາມ (1 ຊົ່ວໂມງ 30 ນາທີ)**

1. ກຸ່ມຜູ້ເຂົ້າຮ່ວມທີ່ມາຈາກຊຸມຊົນ, ແຂວງ, ທ້ອງຖິ່ນ ຫຼື ກຸ່ມພາສາດຽວກັນ.
2. ແຕ່ລະກຸ່ມປຶກສາຄົ້ນຄວ້າຄຳຖາມຕໍ່ໄປນີ້: (30 ນາທີ)
   - ທ່ານວາງແຜນຕິດຕາມກິດຈະກຳຫຍັງສຳລັບການຝຶກອົບຮົມຄັ້ງຕໍ່ໄປໂດຍນຳໃຊ້ສິ່ງທີ່ທ່ານໄດ້ຮ່ຳຮຽນຢູ່ໃນການຝຶກອົບຮົມນີ້?
   - ມີກິດຈະກຳອື່ນໆຫຍັງແດ່ທີ່ເປັນປະໂຫຍດແກ່ທ່ານ ແລະ ເຄືອຂ່າຍ/ການຈັດຕັ້ງຂອງທ່ານ?
   - ທ່ານວາງແຜນຈະຈັດກິດຈະກຳເຫຼົ່ານີ້ເວລາໃດ ແລະ ຢູ່ໃສ?
   - ບົດບາດຫຍັງແດ່ທີ່ກຸ່ມ ແລະ ແຕ່ລະຄົນສາມາດເຮັດໄດ້ຢູ່ໃນກິດຈະກຳຕິດຕາມ?
3. ແຕ່ລະກຸ່ມສະເໜີຜົນຂອງການປຶກສາຄົ້ນຄວ້າດ້ວຍການຂຽນຄຳຕອບໃສ່ໃນເຈ້ຍແຂງໂດຍນຳໃຊ້ຕາຕະລາງຕໍ່ໄປນີ້: (20 ນາທີ)

| ກິດຈະກຳ | ເວລາໃດ | ຢູ່ໃສ | ແມ່ນໃຜ ຮັບຜິດຊອບຫຍັງ |
|---|---|---|---|
| | | | |
| | | | |
| | | | |

4. ຜູ້ອຳນວຍຄວາມສະດວກສະຫຼຸບສັງລວມບົດລາຍງານ ໂດຍເອົາບັນດາກິດຈະກຳທີ່ໄດ້ວາງແຜນເອົາໄວ້ສຳລັບແຕ່ລະພື້ນທີ່ມາລວມກັນ. (10 ນາທີ)
5. ຫຼັງຈາກນັ້ນການປຶກສາຄົ້ນຄວ້າເປັນຄະນະກໍໄດ້ດຳເນີນຊຶ່ງໃນນັ້ນຜູ້ນຳຂອງການຈັດຕັ້ງຫຼືເຄືອຂ່າຍແບ່ງປັນ ແລະ ປຶກສາຄົ້ນຄວ້າແຜນລວມຂອງເຄືອຂ່າຍ, ຊຶ່ງກິດຈະກຳຕິດຕາມທີ່ໄດ້ແນະນຳໃຫ້ມີຄວາມເປັນໄປໄດ້, ແລະ ບົດບາດຂອງເຄືອຂ່າຍ ໃນກິດຈະກຳຕິດຕາມຈະແມ່ນຫຍັງ. (30 ນາທີ)

# ບົດທີ11

## ການປະເມີນຜົນ

# ການປະເມີນຜົນ

*ວັດຖຸປະສົງ:*

1. ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ສະແດງອອກຄວາມຮູ້ສຶກໂດຍລວມ ແລະ ການປະເມີນຂອງເຂົາເຈົ້າກ່ຽວກັບການຝຶກອົບຮົມທັງໝົດ.

*ເວລາ: 1 ຊົ່ວໂມງ*

**ກິດຈະກຳ:**

1. ຜູ້ເຂົ້າຮ່ວມແຕ່ລະຄົນຂຽນແບບຟອມ ປະເມີນຜົນທີ່ໄດ້ຄັດຕິດໃຫ້ ແລະ ສົ່ງໃຫ້ຄະນະຈັດຕັ້ງ. (15 ນາທີ)

**ບົດຝຶກຫັດ I ວາລະແບ່ງປັນ (45 ນາທີ)**

1. ຜູ້ເຂົ້າຮ່ວມແຕ່ລະຄົນແບ່ງປັນໂດຍສັງເຂບ ຄວາມຄິດຂອງຕົນກ່ຽວກັບຄຳຖາມຕໍ່ໄປນີ້:
   - *ການຮຽນຮູ້ທີ່ສຳຄັນກວ່າໝູ່ຢູ່ໃນການຝຶກອົບຮົມຊຸດນີ້ສຳລັບທ່ານແມ່ນ...*
   - *ທ່ານຈະນຳໃຊ້ສິ່ງທີ່ທ່ານຮຳຮຽນຢູ່ໃນການຝຶກອົບຮົມຊຸດນີ້ເພື່ອ ຫຼື ສຳລັບ ...*

2. ຜູ້ອຳນວຍຄວາມສະດວກ ສະຫຼຸບສັງລວມດ້ວຍການໃຫ້ບົດຖະແຫຼງທົ່ວໄປ ຫຼື ການປະເມີນຜົນໄດ້ຮັບໂດຍລວມຂອງການຝຶກອົບຮົມຊຸດນີ້ ໂດຍອີງໃສ່ຄຳເຫັນສະທ້ອນກັບຈາກຜູ້ເຂົ້າຮ່ວມ .

ກຸ່ມພັດທະນາບົດບາດຍິງ-ຊາຍ

ການຝຶກອົບຮົມສຳລັບແມ່ຍິງຊາວພື້ນເມືອງ (ຊົນເຜົ່າ)ກ່ຽວກັບການຕັດສິນບັນຫາ

<u>ແບບຟອມປະເມີນຜົນ</u>

<u>ໝາຍເຫດ</u>: ການປະເມີນຜົນນີ້ແມ່ນສຳລັບອົງການເພື່ອນຳເອົາຄວາມຮູ້ສຶກ ແລະ ການປະເມີນຂອງທ່ານກ່ຽວກັບການຝຶກອົບຮົມ. ຄຳເຫັນ ແລະ ຄຳແນະນຳຂອງທ່ານຈະເປັນປະໂຫຍດຫຼາຍແກ່ພວກເຮົາ ແລະ ຈະເປັນການຊ່ວຍພວກເຮົາໄດ້ປັບປຸງການຝຶກອົບຮົມ ແລະ ເພື່ອຮຳຮຽນຈາກປະສົບການຂອງທ່ານ. ສະນັ້ນ, ກະລຸນາແລກປ່ຽນຂໍ້ມູນຂອງທ່ານກັບພວກເຮົາດ້ວຍ.

*(ນີ້ເປັນການສົນທະນາ, ບໍ່ຈຳເປັນຕ້ອງຂຽນຊື່ຂອງທ່ານໃສ່ໃນບົດປະເມີນນີ້).*

1. ກະລຸນາໃຫ້ຄຳເຫັນຂອງທ່ານກ່ຽວກັບບັນຫາຕໍ່ໄປນີ້ (ຈົ່ງໝາຍດ້ວຍ ✓):
☺ 😐 ☹

| ການປະເມີນຜົນລາຍການຂອງການຝຶກອົບຮົມໂດຍລວມ | | ດີ | ປານກາງ | ອ່ອນ |
|---|---|---|---|---|
| a. | ການຝຶກອົບຮົມໂດຍລວມ | ☺ | 😐 | ☹ |
| b. | ເນື້ອໃນລາຍການຂອງການຝຶກອົບຮົມ | ☺ | 😐 | ☹ |
| c. | ວິທີການ | ☺ | 😐 | ☹ |
| d. | ບົດຝຶກຫັດເປັນກຸ່ມ | ☺ | 😐 | ☹ |
| e. | ຄູ່ມືຂອງການຝຶກອົບຮົມ | ☺ | 😐 | ☹ |
| f. | ເອກະສານສຳລັບການຝຶກອົບຮົມ | ☺ | 😐 | ☹ |
| g. | ໂອກາດຂອງທ່ານສຳລັບການເຂົ້າຮ່ວມຢ່າງຕັ້ງໜ້າ | ☺ | 😐 | ☹ |
| h. | ສິ່ງອຳນວຍຄວາມສະດວກສຳລັບການຝຶກອົບຮົມ | ☺ | 😐 | ☹ |

| | | | | |
|---|---|---|---|---|
| i. | ທີ່ພັກ | ☺ | 😐 | ☹ |
| j. | ອາຫານ | ☺ | 😐 | ☹ |
| k. | ການຈັດຊຸດຝຶກອົບຮົມ | ☺ | 😐 | ☹ |
| m. | ການຊ່ວຍເຫຼືອທາງດ້ານການບໍລິຫານ ແລະ ການເດີນທາງ | ☺ | 😐 | ☹ |
| n. | ເວລາ ຂອງການຝຶກອົບຮົມ | ☺ | 😐 | ☹ |
| o. | ເນື້ອໃນກົງກັບຈຸດປະສົງ/ເປັນປະໂຫຍດ | ☺ | 😐 | ☹ |
| p. | ລີລາໃນການສະເໜີ/ເປັນປະໂຫຍດ | ☺ | 😐 | ☹ |
| q. | ຄວາມລະອຽດຂອງການອຳນວຍຄວາມສະດວກ ແລະ ເຄື່ອງມືສຳລັບການຝຶກອົບຮົມ | ☺ | 😐 | ☹ |

ກະລຸນາໃຫ້ຄຳເຫັນເພີ່ມເຕີມເຊັ່ນດຽວກັນ, ຖ້າຫາກວ່າທ່ານມີ:

....................................................................................................................
....................................................................................................................
....................................................................................................................
....................................................................................................................
....................................................................................................................

2. ທ່ານພົບເຫັນວ່າ ຫົວຂໍ້/ວາລະ ທີ່ໄດ້ນຳສະເໜີ ໃດ ມີປະໂຫຍດ ຫຼາຍກວ່າໝູ່ ແລະຍ້ອນຫຍັງ?

....................................................................................................................
....................................................................................................................
....................................................................................................................
....................................................................................................................

3. ຫົວຂໍ້/ວາລະໃດຂອງການຝຶກອົບຮົມຕ້ອງການໃຫ້ມີການປັບປຸງ?

....................................................................................................................
....................................................................................................................
....................................................................................................................

4. ຄວາມຄິດເຫັນອື່ນໆ ເພື່ອປັບປຸງລາຍການຂອງການຝຶກອົບຮົມ:

..............................................................................................................
..............................................................................................................
..............................................................................................................

5. ຄຳແນະນຳສຳລັບຫົວຂໍ້ຂອງການຝຶກອົບຮົມຄັ້ງຕໍ່ໄປ:

..............................................................................................................
..............................................................................................................
..............................................................................................................

ຂອບໃຈ!

ການແບ່ງປັນ:

ການຮຽນຮູ້ທີ່ສຳຄັນກວ່າໝູ່ຢູ່ໃນການຝຶກອົບຮົມຊຸດນີ້ສຳລັບທ່ານແມ່ນ

..............................................................................................................
..............................................................................................................
..............................................................................................................
..............................................................................................................
..............................................................................................................

ທ່ານຈະນຳໃຊ້ສິ່ງທີ່ທ່ານໄດ້ຮ່ຳຮຽນຢູ່ໃນການຝຶກອົບຮົມຊຸດນີ້ເພື່ອ ຫຼື ສຳລັບ

..............................................................................................................
..............................................................................................................
..............................................................................................................
..............................................................................................................
..............................................................................................................

**ເອກະສານຊ້ອນທ້າຍ 1**

**ຕາຕະລາງການຝຶກອົບຮົມ ການມີສ່ວນຮ່ວມຂອງແມ່ຍິງຊົນ ເຜົ່າໃນການຕັດສິນບັນຫາທີ່ ເມືອງ ............., ແຂວງ .................**

**ວັນທີ ....-...../...../.........**

<u>ຈຸດປະສົງຂອງການຝຶກອົບຮົມໃນຊຸມຊົນ</u>

- ເພື່ອເປັນການສົນທະນາຮ່ວມກັນໃນການຊອກຫາວິທີທາງການຕັດສິນໃຈຂອງແມ່ຍິງ
- ເພື່ອເບິ່ງບົດບາດຂອງແມ່ຍິງໃນການຕັດສິນບັນຫາມີຫຍັງແດ່ໃນສັງຄົມ
- ເພື່ອໂອ້ລົມສົນທະນາ ບັນຫາ, ຂໍ້ຫຍຸ້ງຍາກຂອງແມ່ຍິງທີ່ພົບພໍ້ໃນການຕັດສິນບັນຫາຂອງແມ່ຍິງ

| ເວລາ | ຫົວຂໍ້ | ຈຸດປະສົງ | ວິທີການ | ອຸປະກອນ | ໝາຍເຫດ |
|---|---|---|---|---|---|
| ມື້ທີ 1 ວັນທີ | | | | | |
| 9:00 – **9:15**<br>**15** ນາທີ | ກ່າວເປີດພິທີ<br>ກ່າວຈຸດປະສົງຂອງການຝຶກອົບຮົມ<br>ແນະນຳທີມງານ | | | | |
| **9:15 – 9:45**<br>15 ນາທີ | ແນະນຳຜູ້ເຂົ້າຮ່ວມ ແລະ ສ້າງຄວາມຄາດຫວັງຂອງຜູ້ເຂົ້າຮ່ວມໃນການຝຶກອົບຮົມ | - ເພື່ອເປັນການສ້າງຄວາມລື້ງເຄີຍລະຫວ່າງຜູ້ເຂົ້າຮ່ວມ<br>- ເພື່ອຮູ້ສິ່ງທີ່ຄາດຫວັງຂອງຜູ້ເຂົ້າຮ່ວມ | - ກຸ່ມ 3 ຄົນ<br>- ຜູ້ເຂົ້າຮ່ວມແຕ້ມຮູບ ຕາມໃຈໂດຍອີງໃສ່ ຄວາມຄາດຫວັງຂອງຕົນ<br>- ທຸກຄົນນຳສະເໜີ | ເຈ້ຍແຜ່ນໃຫ່ຍ<br>ເຝີດ<br>ບັດຄຳ<br>ສະກອ໋ດ | |
| 9:45 – 10:00<br>75 ນາທີ | ແນວໂນ້ມໃນການຕັດສິນບັນຫາ | - ເພື່ອສຶກສາກໍລະນີທີ່ແມ່ຍິງ ແລະ ຜູ້ຊາຍ ເປັນຜູ້ຕັດສິນບັນຫາ ແລະ ປະເພດຂອງການຕັດສິນບັນຫາທີ່ໄດ້ເຮັດ<br>- ເພື່ອເບິ່ງການຕັດສິນໃຈຂອງພວກເຮົາຫລາຍໆຄົນກ່ຽວກັບການຕັດສິນບັນຫາໂດຍແມ່ຍິງ ແລະ ຜູ້ຊາຍ<br>- ເພື່ອເບິ່ງເຫດຜົນວ່າເປັນ | <u>ສົນທະນາກຸ່ມຍ່ອຍ:</u> ຍິງ-ຊາຍ (5ນາທີ) ເບິ່ງໂຄງຮ່າງຜູ້ນຳ/ນາຍບ້ານ ເປັນຜູ້ຊາຍ ແລະ ແມ່ຍິງ (5ນາທີ)<br>ຄົ້ນຄ້ວາຕາມຄຳຖາມ: 10 ນາທີ<br>- ແມ່ນການຕັດສິນໃຈແບບໃດທີ່ຜູ້ນຳເຫຼົ່ານີ້ເຮັດ?<br>ແຕ່ລະກຸ່ມນຳສະເໜີ: ກຸ່ມລະ 10 ນາທີ<br>ສົນທະນາກຸ່ມຍ່ອຍ: ຍິງ-ຊາຍ (5 | ເຈ້ຍແຜ່ນໃຫ່ຍ<br>ເຝີດ<br>ສະກອ໋ດ<br><br>ຜູ້ນຳຢູ່ພາຍໃນບ້ານ<br>ນາຍບ້ານ<br>ຮອງນາຍບ້ານ<br>ແມ່ຍິງບ້ານ<br>ຊາວບ້ານ | |

| | | | | | |
|---|---|---|---|---|---|
| | | **ຫຍັງແມ່ຍິງຈຶ່ງບໍ່ຢາກສິນໃຈມີ ຕຳແໜ່ງໃນສັງຄົມ** | ນາທີ)<br>- ເອກະສານການຕັດ ສິນໃຈຕາມ ຮີດຄອງປະ ເພນີຂອງເຜົ່າຄົ້ນຄວ້າ ຕາມຄຳຖາມ: 10 ນາທີ<br>**- ການຕັດສິນໃຈອັນໃດທີ່ຍິງ/ຊາຍ ເຮັດໃນຄອບຄົວ?**<br>**- ການຕັດສິນໃຈອັນໃດທີ່ຍິງ/ຊາຍ ເຮັດໃນຊຸມຊົນ?**<br>**ແຕ່ລະກຸ່ມນຳສະເໜີ: ກຸ່ມລະ 10 ນາທີ**<br>**ຄູຝຶກສະຫລຸບ 10 ນາທີ**<br>**ສົນທະນາກຸ່ມໃຫ່ຍ: (10 ນາທີ)**<br>**ເປັນຫຍັງແມ່ຍິງຈຶ່ງບໍ່ມີຄວາມມຸ່ງມາດ ປາດຖະໜາຫຼືບໍ່ມີຄວາມສາມາດ ເອົາ ຕຳແໜ່ງການຕັດສິນ ບັນຫາ?**<br>(ຮັກສາຄຳຕອບເພື່ອສືບຕໍ່ໃນຫົວຂໍ້ທີ່ 7)<br>**- ຂຽນຄຳຕອບໃສ່ເຈ້ຍແຜ່ນໃຫ່ຍ**<br>ຄູຝຶກສະຫລຸບ (10 ນາທີ) | | |
| 10:00 –10:15 | **ພັກຜ່ອນ** | | | | |
| 10:15 – 12:00 | **ສືບຕໍ່** | **ສືບຕໍ່** | **ສືບຕໍ່** | | |
| 12:00 – 13:00 | **ພັກທ່ຽງ** | | | | |
| 13:15 – 13:15 | **ສືບຕໍ່** | **ສືບຕໍ່** | **ສືບຕໍ່** | | |
| 13:15 – 14:00<br>45 ນາທີ | **ເລື່ອງຂອງນາງ** | **- ເພື່ອໃຫ້ແມ່ຍິງຮູ້ຄຸນຄ່າຂອງ ການປະ ກອບສ່ວນຂອງພວກ ເພີ່ນຕໍ່ຄອບຄົວ ແລະ ສັງຄົມ.**<br>**- ເພື່ອເປັນການຮໍ່າຮຽນກ່ຽວ** | ສົນທະນາ: **ເລື່ອງຂອງນາງ**<br>**ຄູຝຶກ ໄຈ້ແຍກບົດບາດຂອງແມ່ຍິງ**<br>**- ໃນຄອບຄົວ**<br>**- ໃນຊຸມຊົນ** | **ສົນທະນາ ລະດົມສະໝອງ ກ່ຽວກັບຕົວຢ່າງ ແມ່ຍິງທີ່ເດັ່ນໃນບ້ານ,** | |

| | | | | | |
|---|---|---|---|---|---|
| | | ກັບສິ່ງທີ່ແມ່ ຍິງຊາວຊົນເຜົ່າອື່ນໄດ້ເຮັດເພື່ອຊ່ວຍຄອບ ຄົວ ແລະ ຊຸມຊົນຂອງພວກເພິ່ນ | ຄູຝຶກສະຫລຸບ | ຫຼື ຊຸມຊົນ 2 ຫາ 3 ຕົວຢ່າງ. | |
| 14:0014:15 | ພັກຜ່ອນ | | | | |
| 14:15 – 16:00 | ຄວາມສາມາດຂອງແມ່ຍິງໃນການຕັດສິນໃຈ | - ເພື່ອໃຫ້ເຂົ້າໃຈຫຼັກ ການໃນການຕັດສິນໃຈຢ່າງ ຮອບຄອບ | ໂຕ້ວາທີ 2 ກຸ່ມເຫັນດີ ແລະ ບໍ່ເຫັນດີ<br>**- ຂະບວນການຕັດສິນບັນຫາຕາມຮີດຄອງປະເພນີ**<br>ແຕ່ລະກຸ່ມໃຫ້ເຫດຜົນ<br><br><u>ສົນທະນາກຸ່ມຍ່ອຍ: 2-3 ກຸ່ມ</u><br>ນຳໃຊ້ຄຳຖາມຄົ້ນຄວ້າ: 15 ນາທີ<br>**1. ການຕັດສິນບັນຫາທີ່ ຮອບຄອບເຮັດແນວໃດ? ຫຼັກການໃດແດ່?**<br>ແຕ່ລະກຸ່ມນຳສະເໜີ: 15 ນາທີ<br>**ຄູຝຶກຊວນສົນທະນາກຸ່ມໃຫ່ຍ:**<br>**2. ເງື່ອນໄຂທີ່ຈຳເປັນເພື່ອໃຫ້ແມ່ຍິງຊົນເຜົ່າຕັດສິນບັນຫາໄດ້ດີແມ່ນຫັຍງ?**<br>ຄູຝຶດສະຫລຸບ | - ເອກະສານ3 ຕົວຢ່າງ ຂະບວນການ ຕັດສິນໃຈຕາມຮີດຄອງປະເພນີ<br><br>ເຈ້ຍແຜ່ນໃຫ່ຍ<br>ເຝີດ<br>ສະກອ໋ດ | |
| ມື້ທີ່ 2 ວັນທີ່ | | | | | |
| 8:008:30 | ສະຫລຸບຄືນມື້ທີ່ 1<br>ຫຼິ້ນເກມ | | | | |
| 8:309:30 | ແມ່ຍິງໃນການພັດທະນາ | - ເພື່ອຜູ້ເຂົ້າຮ່ວມເຂົ້າໃຈຄວາມໝາຍການພັດທະນາສຳລັບພວກເພິ່ນ<br>- ຄວາມແຕກຕ່າງໂຄງການ | ລະດົມສະໝອງກຸ່ມໃຫ່ມ: (5 ນາທີ)<br>ການພັດທະນາແມ່ນຫັຍງ?<br>ອະທິບາຍນະໂຍບາຍ ແລະ ຄວາມເປັນຈິງ, ສິ່ງທີ່ທ້າທາຍ (5 ນາທີ) | - ເອກະສານ 4 ນະໂຍບາຍ, ຄວາມເປັນຈິງ ແລະ ສິ່ງທ້າທາຍ | |

| | | | | | |
|---|---|---|---|---|---|
| | | **ພັດທະນາທີ່ເພີ່ນເຫັນ**<br>**- ບົດບາດຂອງແມ່ຍິງຊົນເຜົ່າໃນການຕັດສິນໃຈມີອິດທິພົນໃນຊຸມຊົນ** | ຂຽນລາຍການໂຄງການພັດ ທະນາ ທີ່ມີຜົນກະທົບຕໍ່ກັບແມ່ຍິງໃນເຂດ ບ້ານ, ຊຸມຊົນ ທີ່ມີ 2 ໂຄງການ.<br>ແບ່ງເປັນ 2 ກຸ່ມ: ຄົ້ນຄ້ວາ 10 ນາທີ<br>ຂຽນແຜນຄວາມຄິດກ່ຽວກັບບັນດາ ໂຄງການ ໃນແບບປັດຈຸບັນ ແລະ ແບບພື້ນເມືອງແຕ່ລະ ກຸ່ມນຳສະເໜີ 10 ນາທີ<br>ຄູຝຶກສະຫລຸບ<br>ລະດົມສະໝອງກຸ່ມໃຫ່ຍ: 10 ນາທີ<br>ຄິດວ່າການພັດທະນາປະເພດໃດມີ ປະໂຫຍດກັບຊຸມຊົນ?<br>ການພັດທະນາແບບໃດທີ່ແມ່ຍິງຕອ້ງ ການ?<br>ແມ່ຍິງສາມາດມີບົດບາດໃນການ ພັດທະນາຊຸມຊົນແນວໃດ?<br>ຄູຝຶກສະຫລຸບ (5 ນທີ) | **ເຈ້ຍແຜ່ນໃຫ່ຍ**<br>**ເຝີດ**<br>**ສະກອ໋ດ** | |
| 9:30 – 10:15 | | **- ເພື່ອຄົ້ນຄິດວ່າມີອະຄະຕິ ກ່ຽວກັບບົດບາດ ຍິງ - ຊາຍ**<br>**- ເພື່ອເບິ່ງຂໍ້ອອ່ນໃນການປະຕິ ບັດຕາມປະເພ ນີ ຫຼື ລະບຽບ ກົດໝາຍທີ່ ພົວພັນເຖິງມໍລະ ດົກ** | ຜູ້ເຂົ້າຮວ່ມ 4 - 5 ຄົນສະແດງບົດ ບາດກຸ່ມ 10 ນາທີ, ສະແດງ 10 ນາທີ<br>ສົມມຸດ: ເອກະສານແຈກ 5 **ການເຂົ້າເຖິງມໍລະດົກຂອງລູກຍິງ**<br>ອະທິບາຍກ່ຽວກັບບັນດາກົດໝາຍທີ່ ກ່ຽວຂອ້ງ. 10 ນາທີ<br>ຄູຝຶກສະຫລຸບ 5 ນາທີ<br>ຕົວຢ່າງໃນການສືບທອດມໍລະດົກ ຕາມຮີດຄອງປະເພນີ. | **ເອກະສານ 5 ການ ເຂົ້າເຖິງມໍລະດົກຂອງ ລູກຍິງ**<br><br>**ເອກະສານ 6 ລັດຖະທຳມະ ນູນ, ກົດໝາຍພັດທະນາ ແລະ ປົກປອ້ງແມ່ຍິງ, ສິນທິສັນຍາ ຊີດໍ.** | |

| | | | | | |
|---|---|---|---|---|---|
| | | | **ສົນທະນາກຸ່ມໃຫຍ່:** 10 ນາທີ<br>ແມ່ນໃຜເປັນຜູ້ສືບທອດມູນມໍລະດົກໃນກົດໝາຍ? ໃນຄວາມເປັນຈິງເປັນແນວໃດ? ອັນໃດເປັນເຫດຜົນເບື້ອງຫລັງ? ມີຜົນກະທົບຕໍ່ກັບແມ່ຍິງໃນຄອບຄົວແນວໃດ? ວິທີການປະຕິບັດແບບນີ້ແມ່ນໄດ້ມີຜົນກະທົບແນວໃດຕາມໄລຍະເວລາຈົນເຖິງປັດຈຸ ບັນ? ເຮົາສາມາດເຮັດຫຍັງເພື່ອໃຫ້ເກີດຄວາມຍຸດຕິທຳ ແລະ ເປັນທຳ? | **7 ຕົວຢ່າງການສືບທອດມໍລະດົກຂອງ**<br><br>**ເຈ້ຍແຜ່ນໃຫ່ຍ**<br>**ເຟີດ**<br>**ສະກອັດ**<br>**ບັດຄຳ** | |
| 10:0010:30 | **ພັກຜ່ອນ** | | | | |
| 10:3011:30 | **ການແບ່ງວຽກໃນຄົວເຮືອນ** | **- ເຂົ້າໃຈສະພາບການແບ່ງວຽກໃນເຮືອນຂອງຍິງ-ຊາຍ**<br>**- ປຶກສາຄົ້ນຄ້ວາກ່ຽວກັບ ປະເພດການປ່ຽນແປງ ແລະ ສິ່ງທີ່ສາມາດເຮັດ ເພື່ອປ່ຽນແປງສະພາບ** | ແບ່ງ 2 ກຸ່ມ: 10 ນາທີ<br>ແບ່ງວຽກໃນຄອບຄົວທີ່ ເປັນວຽກຍິງ ແລະ ຊາຍ<br>ແຕ່ລະກຸ່ມນຳສະເໜີ 5 ນາທີ<br>ແບ່ງເປັນ 2-3 ກຸ່ມ (ສະແດງບົດບາດສົມມຸດ) 15 ນາທີ (ກຽມ 5 ນາທີ)<br>ບັນຫາໃນການແບ່ງວຽກງານ<br>- ຄອບຄົວ<br>- ຊຸມຊົນ<br>- ໃຫ້ແກ່ກຸ່ມຂອງແມ່ຍິງນຳ ກັນລະດົມສະໝອງສົນທະນາກຸ່ມໃຫ່ຍ: 10 ນາທີ<br>**ຫາກເຮັດໃຫ້ເກີດມີການປ່ຽນແປງແມ່ນຫຍັງທີ່ສາມາດເປັນໄປໄດ້?**<br>**ສາມາດເຮັດຫຍັງແດ່ເພື່ອປ່ຽນແປງ?**<br>ສະໜັບສະໜູນ ຫລື ຄັດຄ້ານ: | **- ຕື່ນນອນ ຈົນເຂົ້ານອນ ທ່ານໄດ້ເຮັດຫຍັງແດ່?**<br>**- ຮູບພາບມືຂອງໃຜ**<br>**- ເອກະສານແຈກ 8 ແລະ 9**<br>**ບົດລະຄອນການແບ່ງງານໃນຄອບຄົວ, ຊຸມຊົນ ແລະ ແມ່ຍິງ ດວ້ຍກັນ**<br><br>**ເຈ້ຍແຜ່ນໃຫ່ຍ**<br>**ເຟີດ**<br>**ສະກອັດເຈ້ຍ** | |

| | | | | | |
|---|---|---|---|---|---|
| | | | (ຂຽນຫົວຂໍ້ໃສ່ເຈ້ຍແຜ່ນໃຫຍ່) 15 ນາທີ<br>**- ຈ້າງຄົນຊ່ວຍວຽກເຮືອນ**<br>**- ຊື້ເຄື່ອງປະດັບຈຸກຈິກເຂົ້າ ເຮືອນ**<br>**- ອົບຮົມເດັກນ້ອຍຜູ້ຊາຍເຮັດວຽກ ເຮືອນຊ່ວຍຕັ້ງແຕ່ໄວເດັກ**<br>**- ຮອ້ງຂໍຜູ້ຊາຍໄປຫາຟືນ, ຕັກນ້ຳໃນ ໄລຍະຊຸມຊົນມີກິດ ຈະກຳ**<br>**- ອົບຮົມການນັບຖືສຳລັບຜູ້ຊາຍທີ່ ຢາກຊ່ວຍແມ່ຍິງເຮັດ ວຽກເຮືອນ, ບໍ່ ໃຫ້ສະແດງຄວາມບໍ່ນັບຖື ຫລື ຫົວ ຂວັນເພີ່ນ**<br>ຄູຝຶກສະຫລຸບ: 5 ນາທີ | | |
| 11:3012:00 | ຄວາມຮຸນແຮງຕໍ່ແມ່ຍິງ | **- ເພື່ອໄດ້ມີການຄົ້ນ ຄ້ວາກ່ຽວ ກັບຄວາມຮຸນແຮງຕໍ່ກັບແມ່ຍິງ ຊົນເຜົ່າໃນຄອບຄົວ, ການ ລວນລາມທາງເພດ ຫຼື ການໃຊ້ ອຳນາດແບບທະຫານ**<br>**- ເພື່ອຫາສາເຫດຂອງຄວາມ ຮຸນແຮງຕໍ່ແມ່ຍິງ** | ອະທິບາຍກ່ຽວກັບຄວາມຮຸນແຮງທີ່ ກ່າວໃນກົດໝາຍ (5 ນາທີ)<br>ລະດົມສະໝອງຜູ້ເຂົ້າຮ່ວມ ໃຫ້ຕົວ ຢ່າງກ່ຽວກັບບັນຫາຄວາມຮຸນແຮງ ພາຍໃນບ້ານ (15 ນາທີ) 1-2 ກໍລະນີ ວິເຄາະຮ່ວມກັນໃນກຸ່ມໃຫ່ຍ<br>- ຮູບແບບຄວາມຮຸນແຮງ<br>- ຜົນກະທົບຕໍ່ແມ່ຍິງ<br>- ສາເຫດຂອງຄວາມຮຸນແຮງ<br>**ຄູຝຶກສະຫລຸບ** | **ເຈ້ຍແຜ່ນໃຫ່ຍ**<br>**ເຝີດ**<br>**ສະກອ໋ດ**<br>**ເອກະສານ**<br>**ກົດໝາຍພັດທະນາ ແລະ ປົກປອ້ງແມ່ຍິງ** | |
| 12:0013:00 | ພັກທ່ຽງ | | | | |
| 13:00—13:45 | ກົດໝາຍ ແລະ ນະໂຍບາຍແຫ່ງ ຊາດໃນການເຂົ້າຮ່ວມ ຂອງແມ່ຍິງ ໃນການຕັດສິນບັນຫາໃນລະດັບ | - ໃຫ້ມີຄວາມຄຸ້ນເຄີຍກັບນະ ໂຍບາຍ ແລະ ກົດໝາຍຂອງ ຊາດ | ຕົວຢ່າງ: ອະທິບາຍ 10 ນາທີ<br>**- ກົດໝາຍພັດທະນາ ແລະ ປົກປອ້ງ ແມ່ຍິງ.** | | |

| | | | | | |
|---|---|---|---|---|---|
| 13:00—13:45 | ກົດໝາຍ ແລະ ນະໂຍບາຍແຫ່ງຊາດໃນການເຂົ້າຮ່ວມ ຂອງແມ່ຍິງໃນການຕັດສິນບັນຫາໃນລະດັບຊາດ | - ໃຫ້ມີຄວາມຄຸ້ນເຄີຍກັບນະໂຍບາຍ ແລະ ກົດໝາຍຂອງຊາດ<br>- ເພື່ອວິເຄາະຂໍ້ດີ ແລະ ຂໍ້ຈຳກັດຂອງກົດໝາຍ<br>- ເພື່ອສຳຫລວດເບິ່ງໂອ ກາດເປັນໄປໄດ້ເພື່ອສະ ໜັບສະໜູນ ແລະ ສົ່ງເສີມການເຂົ້າຮ່ວມຂອງແມ່ຍິງໃນການຕັດສິນບັນ ຫາໃນແຕ່ລະ ລະດັບ | ຕົວຢ່າງ: ອະທິບາຍ 10 ນາທີ<br>- ກົດໝາຍພັດທະນາ ແລະ ປົກປອ້ງແມ່ຍິງ.<br>- ອີງການອຳນາດການປົກ ຄອງບ້ານທີ່ມີແຕ່ຜູ້ຊາຍ<br>ວິເຄາະຮ່ວມກັນ 15 ນາທີ<br>ຈຸດດີ<br>ຂໍ້ຈຳກັດ<br>ລະດົມສະໝອງກຸ່ມໃຫ່ຍ: 15 ນາທີ<br>ຜົນປະໂຫຍດຈາກການບັນດາໂອກາດເຫຼົ່ານີ້ເພື່ອໃຫ້ແມ່ ຍິງເຂົ້າຮ່ວມໃນຂັ້ນຕັດສິນບັນ ຫາຫລາຍຂື້ນ.<br>ຄູຝຶກສະຫລຸບ 5 ນາທີ | | |
| 13:4514:00 | ພັກຜ່ອນ | | | | |
| 14:0014:45 | ຍຸດທະສາດ ເພື່ເອົາແມ່ຍິງເຂົ້າມາຢູ່ໃນຕຳແໜ່ງຕັດສິນບັນຫາ | - ເພື່ອເບິ່ງການສະໜັບສະໜູນ ແລະ ຄັດຄ້ານໃນການໃຫ້ບົດບາດ ແລະ ຄວາມຮັບຜິດຊອບວຽກງານ ແລະ ອຸປະສັກ.<br>- ເບິ່ງຕຳແໜ່ງຂອງແມ່ຍິງໃນຊຸມຊົນ ແລະ ຖອດຖອນບົດຮຽນເອົາຍຸດທະສາດທີ່ເໝາະສົມເພື່ອ ປັບປຸງບັນຫາຢູ່ໃນສັງຄົມ<br>- ວິທີທາງໃນການຂະ ຫຍາຍໃນວົງກ້ວາງຂອບເຂດການຕັດສິນໃຈເພື່ອມີອິດທິພົນຕໍ່ຜູ້ຕັດສິນບັນ ຫາໃນຊຸມຊົນ ແລະ | ໃຫ້ບົດຝຶກຫັດ: **ການຈັດຕັ້ງ ຄະນະກຳມະການງານບຸນບ້ານ 5 ນາທີ**<br>ລະດົມສະໝອງກຸ່ມໃຫ່ຍ: 15 ນາທີ<br>- ເຫດຜົນເປັນຫຍັງຈຶ່ງມີຜູ້ເລືອກເອົາຄວາມຮັບຜິດຊອບ ແລະ ບໍ່ເອົາຄວາມຮັບຜິດຊອບ.<br>ຄູຝຶກສະຫລຸບສາເຫດ<br>ລະດົມສະໝອງກຸ່ມໃຫ່ຍ: 25 ນາທີ<br>- ຈະເຮັດແນວໃດ ໃຫ້ແມ່ຍິງຊົນເຜົ່າເຂົ້າມາຢູ່ໃນຕຳແໜ່ງ ຕັດສິນບັນຫາຢູ່ໃນຊຸມຊົນ ແລະ ການຈັດຕັ້ງ?<br>- ແມ່ຍິງສາມາດເຮັດຫຍັງແດ່ເພື່ອໃຫ້ມີອິດທິພົນໃນການຕັດສິນບັນຫາຢູ່ | | |
| 14:45—15:30 | ປະເມີນຜົນການຝຶກອົບຮົມ<br>ປິດພິທີ | | | | |

**ໃບຊ້ອນທ້າຍ ສອງ:**

ວາລະສະຫຼູບຄວາມ - □ານປະເມີນ

*ວັດຖຸປະສົງ:*

1. ເພື່ອປະເມີນຂະບວນ□ານ, □ານເຂົ້າຮ່ວມ ແລະ ວິທີ□ານຝຶ□ອົບຮົມ ແລະ ເພື່ອຊ່ວຍຖອດຖອນບົດຮຽນແຕ່ລະວັນ.
2. ເພື່ອໃຫ້ມີຄວາມໝັ້ນໃຈໄດ້ວ່າບັນດາຜູ້ເຂົ້າຮ່ວມໄດ້ຮຽນຮູ້ຮ່ວມ□ັນ.

*ເວລາ:* **30 ນາທີ ແຕ່ລະ ຂໍ້ ເມື່ອເລີ່ມຕົ້ນ ມື້ທີ 1 ແລະ ມື້ທີ 4 ຂອງ ການຝຶກອົບຮົມ.**

*□ິດຈະກຳ:*

1. ມອບໝາຍຜູ້ເຂົ້າຮ່ວມ 2ຄົນ ໃຫ້ເຮັດວຽ□ຮ່ວມ□ັນເພື່ອ□ະ□ຽມບົດສະຫຼູບຄວາມສຳລັບມື້ນີ້.
2. ເມື່ອເລີ່ມຕົ້ນ ວາລະ ຂອງມື້ຕໍ່ໄປ, ຜູ້ລາຍທີ່ໄດ້ຮັບມອບໝາຍສະເໜີບົດສະຫຼູບຄວາມໂດຍ ອີງໃສ່□ານສັງເ□ດຂອງຕົນ ແລະ □ານປະເມີນ□ິດຈະກຳຂອງມື້ໂດຍນຳໃຊ້ຕາຕະລາງຕໍ່ໄປນີ້:

| **ເນື້ອໃນ ແລະ ຂະບວນການ** | **ການເຂົ້າຮ່ວມ** | **ວິທີການ** |
|---|---|---|
| ເນື້ອໃນມີຄວາມເໝາະສົມ ແລະ ພຽງພໍບໍ່ສຳລັບວັດຖຸປະສົງຂອງວາລະ? | ຜູ້ເຂົ້າຮ່ວມຝຶ□ອົບຮົມ ມີ□ານເຂົ້າຮ່ວມ ຢ່າງຕັ້ງໜ້າບໍ່? | ວິທີ□ານ ມີປະສິດທິຜົນບໍ່? |
| ເວລາທີ່ໄດ້ຈັດໃຫ້ສຳລັບ ວາລະ ພຽງພໍຫຼືບໍ່? | ໝົດທຸ□ຄົນໄດ້ມີສ່ວນຮ່ວມບໍ່ ຫຼື ວ່າມີບາງຄົນຖື□ປະປ່ອຍ ຢູ່ນອ□? | ຖ້າຫາ□ວ່າບໍ່, ເປັນຫຍັງ? |
| ຄຳແນະນຳເພື່ອປັບປຸງວາລະສຳລັບມື້ນີ້ | ພວ□ເຮົາຈະສາມາດປັບປຸງ□ານເຂົ້າຮ່ວມສຳລັບມື້ນີ້ໄດ້ແນວໃດ? | ຄຳແນະນຳເພື່ອປັບປຸງວິທີ□ານ |

3. ວິທີໜຶ່ງອີ□ເພື່ອໃຫ້ຜູ້ເຂົ້າຮ່ວມໄດ້ສະແດງອອ□□ານປະເມີນຂອງພວ□ເພິ່ນ□ຽວ□ັບວ່າ□ານຝຶ□ອົບຮົມນີ້ດຳເນີນໄປແນວໃດແມ່ນດ້ວຍ□ານສ້າງ **"ພື້ນທີ່ເສລີ", ຊຶ່ງແມ່ນເຈ້ຍແຂງເປົ່າແຜນໜຶ່ງຕິດໃສ່**. ໃຜໆ□ມີສິດຂຽນຄຳເຫັນຂອງຕົນໃສ່ພື້ນທີ່ເສລີໂດຍນຳໃຊ້ຄຳເວົ້າຫຼືຮູບແຕ້ມ, ຕົວຢ່າງເຊັ່ນ, *"ເບື່ອໜ່າຍ"*, *"ເ□ນຕື່ນອີ□"*, *"ພັ□ຜ່ອນສະໝອງຕື່ມອີ□"*, ແລະ ອື່ນໆ.

ກຸ່ມພັດທະນາບົດບາດຍິງ-ຊາຍ

ບ້ານສະພານທອງເໜືອ, ເລກທີ 101/5
ຕູ້ ປ. ນ: 10820
ນະຄອນຫຼວງວຽງຈັນ. ສ ປ ປ ລາວ
ຫ້ອງການ: +856021 263349